ພະຍາກອນ ວຽງຈັນ
24–31°C
ວັນຈັນ 02/11 · ແຈ່ມໃສ

ມະຫາສານ

ລາຍວັນ ◆ MAHAXAN DAILY ◆ mahaxan.com

ໂຄສະນາ
ພື້ນທີ່ໂຄສະນາ
44 × 25 ມມ · ຕິດຕໍ່ WhatsApp 020 5888 6182

ວັນຈັນ 2 ພະຈິກ 2026 · ສະບັບທີ 012 | ສະຫຼຸບຂ່າວປະຈຳວັນສຸກ 30 ຕຸລາ – ວັນອາທິດ 1 ພະຈິກ 2026 · 24 ຂ່າວ | 17 ໜ້າ · ອ່ານຟຣີ · ສົ່ງຕໍ່ໃຫ້ໝູ່ໄດ້

◆ **ເຫດການ** · 16:41 ໂມງ · ອ່ານ 37 ຄັ້ງ

ກວດພົບ 18 ບໍລິສັດ ລັກລອບຂຸດຄົ້ນແຮ່ຄຳຕິກຂ້ອນຢູ່ໃນ 8 ແຂວງທົ່ວປະເທດ



ກອງປະຊຸມສ່ອງແສງວຽກງານກວດກາກ່ຽວກັບແຮ່ທາດ, ການຄຸ້ມຄອງ ແລະ ການແກ້ໄຂບັນຫາຫຍໍ້ທໍ້ດ້ານຊັບພະຍາກອນທຳມະຊາດ ທົ່ວປະເທດ ດຳເນີນໄປໃນວັນທີ 29 ຕຸລາ 2026 ທີ່ຫ້ອງປະຊຸມຄະນະກວດກາສູນກາງພັກ, ໂດຍການເປັນປະທານຂອງສະຫາຍ ວັນໄຊ ພອງສະຫວັນ ປະທານຄະນະກວດກາສູນກາງພັກ, ປະທານອົງການກວດກາແຫ່ງລັດ ແລະ ຫົວໜ້າອົງການຕ້ານການສໍ້ລາດບັງຫລວງສູນກາງ, ມີບັນດາຮອງປະທານຄະນະກວດກາສູນກາງພັກ, ຄະນະປະຈຳພັກແຂວງ, ປະທານກວດກາພັກແຂວງໃນທົ່ວປະເທດ,

ຕໍ່ໜ້າ 2

◆ **ຂ່າວຕ່າງປະເທດ** · 13:08 ໂມງ

ຕມ.ໜອງຄາຍ ຈັບກຸມຍິງຊາວລາວ ຕາມໝາຍຈັບສານອາຍາ ໄທ ຂໍ້ຫາພົວພັນເຄືອຂ່າຍບັນຊີມ້າຂາຍຢາເຖື່ອນ




ຕຳຫຼວດກວດຄົນເຂົ້າເມືອງຈັງຫວັດໜອງຄາຍ ປະເທດໄທ ໄດ້ຈັບກຸມຍິງຊາວລາວ ຕາມໝາຍຈັບຂອງສານອາຍາ ໃນຂໍ້ຫາຮ່ວມກັນຈຳໜ່າຍຢາແຜນປັດຈຸບັນໂດຍບໍ່ໄດ້ຮັບອະນຸຍາດ, ຈຳໜ່າຍຢາທີ່ບໍ່ໄດ້ຂຶ້ນທະບຽນຕຳຣັບຢາ ແລະ ມີຄວາມເຊື່ອມໂຍງກັບເຄືອຂ່າຍບັນຊີມ້າ.

ເຫດການດັ່ງກ່າວເກີດຂຶ້ນໃນວັນທີ 28 ຕຸລາ 2026 ໂດຍມີພັນຕຳຫຼວດເອກ ນິບພະດິນ ຮັກຊາດ ຜູ້ກຳກັບການກວດຄົນເຂົ້າເມືອງຈັງຫວັດໜອງຄາຍ ພ້ອມດ້ວຍຮອງຜູ້ກຳກັບການ ແລະ ເຈົ້າໜ້າທີ່ທີ່ກ່ຽວຂ້ອງ ດຳເນີນການຈັບກຸມຕາມໝາຍຈັບສານອາຍາເລກທີ 3289/2569 ລົງວັນທີ 11

ຕໍ່ໜ້າ 2

ໃນສະບັບນີ້

2 ເຫດການ
2 ຂ່າວພາຍໃນ
7 ເສດຖະກິດ-ສັງຄົມ
9 ຂ່າວຕ່າງປະເທດ
15 ມະຫາສານ ມື້ນີ້: ນ້ຳມັນ, ເງິນ, ຄຳ, ຫວຍ, ອາກາດ
16 ແຈ້ງການ
17 ທ້າຍສະບັບ



◆ **ແຈ້ງການ** · 05:43 ໂມງ

ດ່ວນ ແຈ້ງການມອດໄຟ ວັນທີ 01 ພະຈິກ 2026

ອ່ານໜ້າ 16 ▸



◆ **ຂ່າວພາຍໃນ** · 10:04 ໂມງ

ກູ້ໄພເຊກອງເຖິງກັບປອດຫົວ! ຊາວບ້ານໂທແຈ້ງ “ຄົນຜິດກຳ...

ອ່ານໜ້າ 2 ▸



◆ **ຂ່າວຕ່າງປະເທດ** · 11:10 ໂມງ

ຣັດເຊຍສົ່ງໂດຣນໂຈມຕີສະຖານີລົດໄຟໃນເມືອງນີໂປ ປະເທດ...

ອ່ານໜ້າ 9 ▸

ໂຄສະນາ
ໃຫ້ແບຣນຂອງທ່ານ ຢູ່ໜ້າ 1 ທຸກເຊົ້າ
ໂຄສະນາໃນ ມະຫາສານ ລາຍວັນ — ໜັງສືພິມ PDF ທີ່ຄົນລາວດາວໂຫຼດ ແລະ ຮັບທາງອີເມວ ທຸກເຊົ້າ
WhatsApp 020 5888 6182

ກວດພົບ 18 ບໍລິສັດ ລັກລອບຂຸດຄົ້ນແຮ່ຄຳຕົກຄ້ອນຢູ່ໃນ 8 ແຂວ... (ຕໍ່ຈາກໜ້າ 1)

ຫົວໜ້າກົມພາຍໃນຄະນະກວດກາສູນກາງ ພັກ ເຂົ້າຮ່ວມ.

ໂອກາດດັ່ງກ່າວ, ສະຫາຍ ວັນໄຊ ພອງສະຫວັນ ໄດ້ມີຄຳເຫັນໃນກອງປະຊຸມ ວ່າ: ໃນໄລຍະຜ່ານມາຢູ່ບັນດາແຂວງຈຳ ນວນໜຶ່ງ ໄດ້ເກີດມີສະພາບປະຊາຊົນ ແລະ ນັກທຸລະກິດ ໄດ້ບຸກລັກລອບ ຂຸດຄົ້ນແຮ່ຄຳຕົກຄ້ອນຢູ່ຕາມລຽບສາຍນ້ຳ ຕ່າງໆ ເຊິ່ງໄດ້ສົ່ງຜົນກະທົບຕໍ່ສະພາບແວດ ລ້ອມທຳມະຊາດຢ່າງຫລວງຫລາຍ; ພັກ, ລັດຖະບານ ກໍ່ໄດ້ເອົາໃຈໃສ່ໃນການ ຕິດຕາມ, ກວດກາ ແລະ ໄດ້ອອກຄຳສັ່ງ ເດັດຂາດເຖິງບັນດາແຂວງໃນຂອບເຂດ ທົ່ວປະເທດ ແລະ ໃນກອງປະຊຸມຄົບ ຄະນະບໍລິຫານງານສູນ ກາງພັກວິສາມັນ ສະໄໝທີ XII.

ຄະນະສະເພາະກິດ ກໍ່ໄດ້ລາຍງານ ກ່ຽວກັບ ການແກ້ໄຂບັນຫາແຮ່ທາດ ເຊິ່ງ ໄດ້ລົງກວດກາຢູ່ 8 ແຂວງ 23 ຈຸດ, ພົບ ເຫັນການກະທຳຜິດຂອງ 18 ບໍລິສັດ ແລະ ບຸກຄົນ, ໄດ້ກັກຕົວກຳມະກອນ 118 ຄົນ ມີທັງຄົນລາວ ແລະ ຄົນຕ່າງ ປະເທດ, ຍຶດກົນຈັກ ແລະ ພາຫະນະ ທີ່ ເຄື່ອນໄຫວຜິດກົດໝາຍ ລວມຈັກ 38 ຄັນ, ເຮືອບ່ວງ 20 ລຳ, ລົດຕັກ 2 ຄັນ, ລົດ ດ້ວມ 1 ຄັນ, ຕະແກງຮ່ອນແຮ່, ຈັກດູດ ນ້ຳ ແລະ ອື່ນໆ, ນອກນີ້ ຍັງໄດ້ຍຶດແຮ່ຄຳ ດິບ 77 ກິໂລກຣາມ ຢູ່ບາງແຂວງ.

ສະນັ້ນ, ຮຽກຮ້ອງມາຍັງຜູ້ເຂົ້າຮ່ວມ ກອງປະຊຸມ ຈົ່ງພ້ອມກັນເຊີດຊູຄວາມ ຮັບຜິດຊອບຂອງຕົນ ໃນການຄົ້ນຄວ້າ ປະກອບ ຄຳຄິດຄຳເຫັນ ແລະ ຍົກບັນຫາ ຕົວຈິງທີ່ພົບເຫັນຢູ່ແຕ່ລະທ້ອງຖິ່ນ ເພື່ອ ພ້ອມກັນ ຄົ້ນຄວ້າຊອກຫາວິທີແກ້ໄຂ ບັນຫາດັ່ງກ່າວໃຫ້ຂາດຕົວ ແລະ ໃຫ້ໄດ້ ຮັບຜົນສຳເລັດຕາມຄາດໝາຍທີ່ໄດ້ກຳນົດ ໄວ້.

ຕມ.ໜອງຄາຍ ຈັບກຸມຍິງຊາວລາວ ຕາມໝາຍຈັບສາມອາຍາໄທ... (ຕໍ່ຈາກໜ້າ 1)

ມິຖຸນາ 2026.

ຜູ້ຖືກຈັບແມ່ນ ນາງ ລັດສະໝີ ເນົາ ອະລາດ (MRS. LATSAMY NAOVALAT) ອາຍຸ 40 ປີ ມີທີ່ຢູ່ບ້ານ ນາຊັບ ເມືອງນາຊາຍທອງ ນະຄອນຫຼວງ ວຽງຈັນ ສປປ ລາວ. ໂດຍມີພະນັກງານ ສອບສວນກອງກຳກັບການ 4 ກອງບັງຄັບ ການປາບປາມການກະທຳຜິດກ່ຽວກັບ ຜະລິດຕະພັນ ແລະ ການບໍລິໂພກ ເປັນ ເຈົ້າຂອງຄະດີ.

ພັນຕຳຫຼວດໂທ ທິຍາພັດ ຮັງສິພ ທາມະກຸນ ຮອງຜູ້ກຳກັບການກວດຄົນເຂົ້າ ເມືອງຈັງຫວັດໜອງຄາຍ ເປີດເຜີຍວ່າ ກ່ອນໜ້ານີ້ ເຈົ້າໜ້າທີ່ກອງກຳກັບການ 4 ໄດ້ຈັບກຸມຜູ້ຕ້ອງຫາລັກລອບຈຳໜ່າຍຢາ ແຜນປັດຈຸບັນ ໂດຍບໍ່ໄດ້ຮັບອະນຸຍາດ ແລະ ຈຳໜ່າຍຢາທີ່ບໍ່ໄດ້ຂຶ້ນທະບຽນຕຳຣັບ ຢາ.

ຈາກການກວດສອບພົບວ່າ ຜູ້ຂາຍ ຢາດັ່ງກ່າວໄດ້ໃຫ້ລູກຄ້າໂອນເງິນຄ່າຊື້ຢາ ເຂົ້າບັນຊີທະນາຄານກຸງເທບ ເຊິ່ງມີ ນາງ ລັດສະໝີ ເນົາອະລາດ ເປັນເຈົ້າຂອງບັນຊີ.

ຈາກການສອບປາກຄຳ ນາງ ລັດສະໝີ ໃຫ້ການວ່າ ຕົນປະກອບອາຊີບ ຄ້າຂາຍ ໂດຍເປີດຮ້ານຂາຍເຄື່ອງຊຳໃນ ສປປ ລາວ. ຕໍ່ມາໄດ້ເປີດບັນຊີທະນາຄານ ກຸງເທບ ເພື່ອຮັບເງິນໂອນຈາກຍາດພີ່ນ້ອງ ແລະ ຄົນຮູ້ຈັກໃນພື້ນທີ່ໃກ້ຄຽງ ທີ່ ເດີນທາງໄປຢູ່ຝັ່ງໄທ ເພື່ອສົ່ງເງິນກັບບ້ານ ຫຼື ໃຊ້ຮັບຊຳລະຄ່າສິນຄ້າຂອງຮ້ານຕົນເອງ.


ນາງລັດສະໝີອ້າງວ່າ ບໍ່ຮູ້ວ່າເງິນບາງ ສ່ວນທີ່ໂອນເຂົ້າບັນຊີຂອງຕົນ ເປັນເງິນທີ່ ມາຈາກການກະທຳຜິດກົດໝາຍຫຼືບໍ່. ພາຍຫຼັງການຈັບກຸມ ເຈົ້າໜ້າທີ່ຈະ ຄວບຄຸມຕົວສົ່ງໃຫ້ພະນັກງານສອບສວນ ກອງກຳກັບການ 4 ເພື່ອດຳເນີນຄະດີຕາມ ກົດໝາຍຕໍ່ໄປ.

ທີ ມາ : nongkhainewsonline

ຂ່າວພາຍໃນ

◆ **ຂ່າວພາຍໃນ** · 10:04 ໂມງ · ອ່ານ 25 ຄັ້ງ

ກູ້ໄພເຊກອງເຖິງກັບປວດຫົວ! ຊາວບ້ານໂຫແຈ້ງ “ຄົນຜິດກຳ-ຜີເຂົ້າ”



ເກີດເຫດການທີ່ເຮັດໃຫ້ເຈົ້າໜ້າທີ່ ກູ້ໄພເຖິງກັບກຸມຂະນັບ ແລະ ສະຫຼົດໃຈ ໄປພ້ອມໆກັນ ຫຼັງຈາກທີ່ ໜ່ວຍກູ້ໄພ ປະຊາຮ່ວມໃຈ ເຊກອງ ໄດ້ຮັບແຈ້ງເຫດ ດ່ວນຈາກຊາວບ້ານວ່າ ມີຄົນ "ຜິດກຳ" ອາການສາຫັດ ຕ້ອງການຄວາມຊ່ວຍເຫຼືອ ເອົາໄປໂຮງໝໍດ່ວນ.

ເມື່ອທີມກູ້ໄພເດີນທາງໄປເຖິງຈຸດ ເກີດເຫດ ພາບທີ່ເຫັນຄືມີທັງຄວັນໄຟ ແລະ ກອງໄຟທີ່ກຳລັງລຸກໄໝ້ຢ່າງຮຸນແຮງ

ຕໍ່ໜ້າ 3

ກູ້ໄພເຊກອງເຖິງກັບປອດຫົວ! ຊາວບ້ານໂຫແຈ້ງ “ຄົນຜິດກຳ-ຜິ... (ຕໍ່ຈາກໜ້າ 2)

(ຕາມຄວາມເຊື່ອເລື່ອງການຢຸ່ກຳ) ຈົນເບິ່ງຄືການເຜົາຄົນທັງເປັນ. ສ່ວນຕົວຄົນເຈັບນັ້ນ ນອນໝົດສະຕິ, ບໍ່ຕອບສະໜອງ, ຕາເຫຼືອກຕາຄ້າງ, ກັດສົບກັດປາກ, ຕີນມືໂກບ (ເກຣັງ) ແລະ ເວົ້າເພີ້ຝັນເປັນພາສາທີ່ຟັງບໍ່ຮູ້ເລື່ອງ.

ຈາກການສອບຖາມຜູ້ເປັນຜົວ ໄດ້ຂໍ້ມູນວ່າ ເມຍອາຍຸພຽງ 18 ປີ ແລະ ນີ້ແມ່ນລູກຄົນທຳອິດ ໂດຍທາງຄອບຄົວໄດ້ໃຫ້ເກີດລູກເອງຢູ່ເຮືອນ ເຮັດໃຫ້ເມຍເສຍເລືອດຫຼາຍໃນລະຫວ່າງເກີດລູກ. ເມື່ອເຫັນອາການຄົນເຈັບທັງຊ້ອກ ແລະ ວິກິດຂະໜາດນີ້ ທາງໜ່ວຍກູ້ໄພໄດ້ພະຍາຍາມຈະນຳຕົວສົ່ງໂຮງໝໍໂດຍດ່ວນ ເພາະໄລຍະທາງຫ່າງຈາກໂຮງໝໍກວ່າ 30 ກິໂລແມັດ.

ແຕ່ເລື່ອງລາວກັບສະເດາະໃຈ ເມື່ອທາງຄອບຄົວ ແລະ ຍາດພີ່ນ້ອງ ເດັດຂາດບໍ່ຍອມໃຫ້ເອົາຄົນເຈັບໄປໂຮງໝໍ ໂດຍອ້າງວ່າອາການດັ່ງກ່າວບໍ່ແມ່ນອາການເຈັບປ່ວຍ ແຕ່ແມ່ນອາການ "ຜີເຂົ້າ" ແລະ ໄລ່ໃຫ້ທີມກູ້ໄພກັບຄືນ ໂດຍບອກວ່າບໍ່ໄປໂຮງໝໍກໍໄດ້. ເຫດການນີ້ເຮັດໃຫ້ທີມກູ້ໄພທັ້ງຟ້າວ ທັ້ງເປັນຫ່ວງຊີວິດຄົນເຈັບ ແຕ່ກໍຕ້ອງໄດ້ແບມໜ້າກັບດ້ວຍຄວາມອິດໜາລະອາຍໃຈ ແລະ ປອດຫົວໄປຕາມໆ ກັນກັບຄວາມເຊື່ອທີ່ອາດເຮັດໃຫ້ເກີດຄວາມສູນເສຍ.

(ທາງເວັບໄຊ ແລະ ທີມຂ່າວຂໍສົ່ງກຳລັງໃຈໃຫ້ທີມກູ້ໄພ ແລະ ຫວັງວ່າຄົນເຈັບຈະໄດ້ຮັບການປິ່ນປົວທາງການແພດຢ່າງທັນທ່ວງທີ).

ທີ່ມາ: ກູ້ໄພເຊກອງ

◆ ຂ່າວພາຍໃນ · 15:25 ໂມງ · ອ່ານ 12 ຄັ້ງ

ໂຮມຊຸມນຸມສະຫຼອງວັນສ້າງຕັ້ງກອງບັນຊາການປ້ອງກັນເຄື່ອນທີ່ ຄົບຮອບ 25 ປີ



ພິທີໂຮມຊຸມນຸມມິດຕິ່ງສະເຫຼີມສະຫຼອງວັນສ້າງຕັ້ງກອງບັນຊາການປ່ອງກັນເຄື່ອນທີ່ ກະຊວງປ້ອງກັນຄວາມສະຫງົບ ຄົບຮອບ 25 ປີ (2 ພະຈິກ 2001- 2 ພະຈິກ 2026) ໄດ້ຈັດຂຶ້ນໃນວັນທີ 30 ຕຸລາ 2026, ເຂົ້າຮ່ວມ ແລະ ປາຖະກະຖາມູນເຊື້ອ ໂດຍ ພົຕ ຈັນສະແຫວງ ທິບຄຸນທອງ ອະດີດຫົວໜ້າກອງບັນຊາການປ້ອງກັນເຄື່ອນທີ່, ມີຄະນະພັກ-ຄະນະກອງບັນຊາການ,ຫ້ອງ, ສູນ, ກອງພັນ, ພະແນກ, ພ້ອມດ້ວຍ ພະນັກງານອາວຸໂສບຳນານ ແລະ ນາຍຕຳຫຼວດຫຼັກແຫຼ່ງ ເຂົ້າຮ່ວມ.

ໃນພິທີ, ພົຕ ຈັນສະແຫວງ ທິບຄຸນທອງ ໄດ້ຍົກໃຫ້ເຫັນຕົ້ນກຳເນີດ, ມູນເຊື້ອ ແລະ ຜົນງານທີ່ຍາດມາໄດ້ໄລຍະຜ່ານມາ ຂອງກອງບັນຊາການປ້ອງກັນເຄື່ອນທີ່ ວ່າ: ກອງພັນ 208 ໄດ້ສ້າງຕັ້ງຂຶ້ນຢ່າງເປັນທາງການໃນ ວັນທີ 2 ພະຈິກ 2001 ເປັນກອງພັນເອກະລາດ, ມີຖານະທຽບເທົ່າ ກົມ, ກອງບັນຊາການອ້ອມຂ້າງກະຊວງພາຍໃນ; ລະບົບການຈັດຕັ້ງໃນເວລານັ້ນ ມີ 3 ຫ້ອງ, 4 ກອງຮ້ອຍຂຶ້ນກັບ, ມີຈຳນວນພົນ 206 ສະຫາຍ ຍິງ 17 ສະຫາຍ; ຜ່ານການເຄື່ອນໄຫວຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງກົມກອງກໍມີຜົນສຳເລັດ ແລະ ເຕີບໃຫຍ່ໃນຫຼາຍດ້ານ, ຖ້າທຽບໃສ່ເງື່ອນໄຂໃນໄລຍະໃໝ່ ເຫັນວ່າຊື່ກົມກອງຍັງບໍ່ແທດເໝາະ ກັບພາລະບົດບາດ, ໜ້າທີ່ການເມືອງຂອງກົມກອງທີ່ໄດ້ຮັບມອບໝາຍ. ສະນັ້ນ, ຈຶ່ງຄົ້ນຄວ້າຊື່ກົມກອງໃໝ່ ແລະ ນຳ ສະເໜີຕໍ່ຄະນະພັກກະຊວງປ້ອງກັນ ຄວາມສະຫງົບຈຶ່ງໄດ້ຕົກລົງປ່ຽນຊື່ຈາກກອງບັນຊາການ 208 ມາເປັນກອງບັນຊາການປ້ອງກັນເຄື່ອນທີ່ ຈົນເຖິງປັດຈຸບັນ ອີງຕາມດຳລັດຂອງນາຍົກລັດຖະມົນຕີ ເລກທີ 79/ນຍ,ລົງວັນທີ 27 ກຸມພາ 2007.

ຕະຫຼອດໄລຍະ ຜ່ານມາ, ກອງບັນຊາການປ້ອງກັນເຄື່ອນທີ່ ໄດ້ເຄື່ອນໄຫວວຽກງານວິຊາສະເພາະ ຕິດພັນກັບວຽກງານປ້ອງກັນຄວາມສະຫງົບປະຊາຊົນ ກຳແໜ້ນສະ ພາບການຢຸ່ບັນດາຈຸດຫຼໍ່ແຫຼມ ແລະ ເປົ້າໝາຍກໍ່ຄວາມບໍ່ສະຫງົບ,ຄວາມບໍ່ເປັນລະບຽບຮຽບຮ້ອຍໃນສັງຄົມ.ພ້ອມ ນີ້,ຍັງໄດ້ສ້າງແຜນ ແລະ ບັນຈຸກຳລັງເຂົ້າປ້ອງກັນເຂົ້າປ້ອງ ກັນຮັບໃຊ້ໃຫ້ແກ່ລັດຖະບານ ແລະ ສັງຄົມໃນໄລຍະຜ່ານມາແມ່ນຖືວ່າ ເປັນກຳລັງທີ່ສຳຄັນ ໃນການປ້ອງກັນງານບຸນ, ງານສຳຄັນຕ່າງໆຂອງພັກ-ຂອງຊາດ, ປ້ອງກັນແຂກພາຍໃນແລະ ຕ່າງປະເທດ ແມ່ນມີຄວາມສະຫງົບປອດໄພໂດຍພື້ນຖານ.

ຜ່ານການຈັດຕັ້ງປະຕິບັດບັນດາ ວຽກງານ ກອງບັນຊາ ການປ້ອງກັນເຄື່ອນທີ່ ໄດ້ຮັບການຍ້ອງຍໍຍ້ອງ ຈາກພັກ ແລະ ລັດຖະບານ, ກະຊວງ ປກສ; ໃນນີ້, ໄດ້ຮັບຫຼຽນໄຊອິດສະຫຼະຊັ້ນ II ຈຳນວນ 1 ໜ່ວຍ, ຫຼຽນໄຊອິດສະຫຼະຊັ້ນ III ຈຳນວນ 1 ໜ່ວຍ,ຫຼຽນໄຊແຮງງານຊັ້ນ I ຈຳນວນ 1 ໜ່ວຍ, ຫຼຽນໄຊແຮງງານຊັ້ນ II ຈຳນວນ 2 ໜ່ວຍ, ຫຼຽນ ໄຊແຮງງານ ຊັ້ນ III ຈຳນວນ 2 ໜ່ວຍ, ຫຼຽນກາ ແຮງງານ 7 ໜ່ວຍ, ຫຼຽນທີ່ລະນຶກຕຳຫຼວດຝຣັ່ງ 1 ໜ່ວຍ, ຫຼຽນຊ່ຽວ ຊານ ສສ ຫວຽດນາມ 1 ອັນ, ຫຼຽນທີ່ລະນຶກຈາກ ສສ ຫວຽດນາມ 2 ໜ່ວຍ, ໃບຍ້ອງຍໍ ລັດຖະບານ ຫຼາຍຂັ້ນ ຈຳ ນວນ 13 ໃບ, ຫຼຽນທີ່ລະນຶກ 70 ປີ ກອງທັບປະຊາຊົນລາວ 1 ໜ່ວຍ. ພ້ອມນີ້, ບຸກຄົນ ຍັງໄດ້ຮັບຍ້ອງຍໍ ໃຫ້ບັນຂັ້ນຕ່າງໆຈຳນວນຫຼາຍ.

ສັງລວມແລ້ວ, ກຳລັງປ້ອງກັນເຄື່ອນທີ່ ໄດ້ເອົາໃຈໃສ່ປະຕິບັດສອງໜ້າທີ່ຍຸດທະສາດ ຄື: ປົກປັກຮັກສາ ແລະ ສ້າງສາປະເທດຊາດ ຕາມພາລະບົດບາດ, ຂອບເຂດສິດ, ໜ້າທີ່ ແລະ ຮັກສາໄດ້ ສະຖຽນລະພາບທາງດ້ານການເມືອງ, ເສດຖະກິດ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະ ຄວາມສະຫງົບປອດໄພໄດ້ເປັນຢ່າງດີ, ມີມູນເຊື້ອປະຕິບັດຄຳສັ່ງ, ປະຕິບັດລະບຽບວິໄນຢ່າງເຂັ້ມງວດ, ຝຶກແອບວິຊາສະເພາະ ແລະ ພັດທະນາຕົນເອງ ເຂົ້າໃນການປ້ອງກັນຜູ້ນຳພັກ-ລັດ,ສຳນັກງານອົງການກອງປະຊຸມໃຫຍ່, ວັນບຸນສຳຄັນຂອງຊາດ, ປ້ອງກັນແຂກພາຍໃນ ແລະ ຕ່າງປະເທດໃຫ້ມີຄວາມປອດໄພ ຍ້ອນແນວນັ້ນຂັ້ນເທິງຈຶ່ງໄດ້ຍ້ອງຍໍ ແລະ ເວົ້າວ່າ ກຳລັງປ້ອງກັນເຄື່ອນທີ່ ປຽບເໝືອນ ກຳປັ້ນເຫຼັກຂອງກະຊວງປ້ອງກັນຄວາມສະ ຫງົບ ສາມາດເອີ້ນກຳລັງ ໄດ້ຕະຫຼອດ 24 ຊົ່ວໂມງ ແລະ ເຮັດສຳເລັດໜ້າທີ່ອັນມີກຽດສະຫງ່າຂອງຕົນ ໄດ້ຢ່າງຈົບງາມ.

ຂ່າວພາຍໃນ · 09:18 ໂມງ · ອ່ານ 7 ຄັ້ງ

ດ່ານພາສີສາກົນພູເກືອ ເກັບລາຍຮັບເພີ່ມຂຶ້ນ 24,24%



ແຫລ່ງຂ່າວຈາກ ແຂວງອັດຕະປື ໃຫ້ຮູ້ວ່າ: ໄລຍະ 9 ເດືອນຜ່ານມາ, ດ່ານພາສີສາກົນພູເກືອ ແຂວງອັດຕະປື ສາມາດຈັດເກັບລາຍຮັບເຂົ້າງົບປະມານແຫ່ງລັດໄດ້ 207 ຕື້ກວ່າກີບ ເທົ່າກັບ 71,69% ຂອງແຜນການປີ ແລະ 95,59% ຂອງແຜນການ 9 ເດືອນ, ເພີ່ມຂຶ້ນ 24,24% ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ.

ທ່ານ ສີມອນ ອຸທິຄຸນ ຫົວໜ້າດ່ານພາສີສາກົນພູເກືອ ໄດ້ລາຍງານໃນວັນທີ 29 ຕຸລາ 2026 ວ່າ: ໃນປີ 2026 ນີ້, ດ່ານພາສີສາກົນພູເກືອ ໄດ້ຮັບມອບໝາຍແຜນຈັດເກັບລາຍຮັບທັງໝົດ 290 ຕື້ກີບ ໃນນັ້ນ, ແຜນການ 9 ເດືອນມີມູນຄ່າ 217 ຕື້ກວ່າກີບ. ຜ່ານການຈັດເກັບແຕ່ຕົ້ນປີຮອດວັນທີ 30 ກັນຍາ 2026 ສາມາດເກັບລາຍຮັບໄດ້ 207 ຕື້ກວ່າກີບ, ໃນນັ້ນ, ລາຍຮັບຈາກພາສີ ມີ 47 ຕື້ກວ່າກີບ ຫລື 22,77% ແລະ ລາຍຮັບຈາກອາກອນ ມີ 160 ຕື້ກວ່າກີບ ຫລື 77,23%.

ສຳລັບວຽກງານການກວດກາ ແລະ ສະສາງຄະດີໃນໄລຍະ 9 ເດືອນ ດ່ານມີຄະດີເກີດຂຶ້ນ 246 ຄະດີ ມູນຄ່າ 672,89 ລ້ານກີບ. ພ້ອມນັ້ນ, ຍັງມີຄະດີຍົກມາຈາກງວດກ່ອນ 2 ຄະດີ ມູນຄ່າ 1.218 ລ້ານກີບ ລວມຄະດີທີ່ສະສາງໃນ 9 ເດືອນ ມີ 248 ຄະດີ ມູນຄ່າ 1.890,89 ລ້ານກີບ, ລວມຄ່າປັບໃໝ 1.311,35 ລ້ານກີບ ແລະ ມູນຄ່າມອບເຂົ້າງົບປະມານທັງໝົດ 1.311,35 ລ້ານກີບ, ເພີ່ມຂຶ້ນ 48,65% ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ.

ທ່ານ ສີມອນ ອຸທິຄຸນ ໃຫ້ຮູ້ຕື່ມວ່າ: ໃນ 3 ເດືອນທ້າຍປີ 2026 ຄະນະນຳຂອງດ່ານຈະສືບຕໍ່ຊີ້ນຳການຈັດເກັບລາຍຮັບໃຫ້ບັນລຸຕາມແຜນການ, ເພີ່ມທະວີການຕິດຕາມ ແລະ ກວດກາການເກັບລາຍຮັບໃຫ້ຖືກຕ້ອງ, ໂປ່ງໃສ ແລະ ມີປະສິດທິຜົນ ພ້ອມທັງເຂັ້ມງວດຕໍ່ການຫລົບຫລີກພາສີ, ການສໍ້ໂກງທາງພາສີ ແລະ ການຄ້າຂ້າມແດນທີ່ຜິດກົດໝາຍ. ນອກນີ້, ຈະສືບຕໍ່ອຳນວຍຄວາມສະດວກໃຫ້ແກ່ຜູ້ປະກອບການ ແລະ ຜູ້ນຳເຂົ້າ-ສົ່ງອອກ, ນຳໃຊ້ເທັກໂນໂລຊີພັດທະນາ ລະບົບບໍລິການ ແລະ ປັບປຸງຂັ້ນຕອນພິທີການພາສີໃຫ້ວ່ອງໄວ, ຄວບຄູ່ກັບການສ້າງ ແລະ ຍົກລະດັບຄວາມຮູ້, ຄວາມສາມາດ ແລະ ວິໄນຂອງພະນັກງານພາສີ ເພື່ອຍົກສູງຄຸນນະພາບວຽກງານ ແລະ ປະສິດທິຜົນໃນການຈັດເກັບລາຍຮັບຂອງລັດ.

ຂ່າວ: ມະນີວອນ

ໂຄສະນາ

ບໍ່ມີເວລາອ່ານ? ກົດຟັງໄດ້ເລີຍ

ທຸກຂ່າວໃນ mahaxan.com ມີສຽງອ່ານພາສາລາວ — ຟັງຂະນະຂັບລົດ ຫຼື ເຮັດວຽກ. ເປີດຂ່າວໃດກໍໄດ້ ແລ້ວກົດ ▶ ຟັງ.

ຮັບ ມະຫາສານ ລາຍວັນ ທາງອີເມວ ຟຣີ

ໜັງສືພິມສະບັບໃໝ່ ສົ່ງເຖິງອີເມວທ່ານ ທຸກເຊົ້າ ກ່ອນເຂົ້າວຽກ. ສະແກນ QR ຫຼື ເຂົ້າ mahaxan.com/newspaper

◆ ຂ່າວພາຍໃນ · 09:27 ໂມງ · ອ່ານ 5 ຄັ້ງ

ລັດຖະບານ ແລະ ອຸຍນີເຊັບ ຢືນຢັນຄຳໝັ້ນສັນຍາໃຫ້ເດັກທຸກໆຄົນໃນລາວມີການເລີ່ມຕົ້ນຊີວິດທີ່ມີສຸຂະພາບດີ



ການຢ້ຽມຢາມຄັ້ງນີ້, ນຳໂດຍ ທ່ານ ສຸລິວັດ ສຸວັນນະຈຸມຄຳ ຮອງລັດຖະມົນຕີກະຊວງການເງິນ ແລະ ທ່ານ ນາງ ມາກາລີ ໂธมเดน ຮອງຜູ້ຕາງໜ້າອົງການສະຫະປະຊາຊາດ ກອງທຶນສຳລັບເດັກ (UNICEF) ປະຈຳ ສປປ ລາວ, ມີພະນັກງານຂັ້ນສູງຈາກກົມດາກະຊວງ, ສະຫະພັນແມ່ຍິງລາວ ແລະ ອຳນາດການປົກຄອງແຂວງ ສະຫວັນນະເຂດ ແລະ ເມືອງ ເຂົ້າຮ່ວມ.

ທ່ານ ສຸລິວັດ ສຸວັນນະຈຸມຄຳ ໄດ້ກ່າວວ່າ: ການເລີ່ມຕົ້ນຊີວິດທີ່ມີສຸຂະພາບດີຂອງລູກຫຼານພວກເຮົາ ແມ່ນການລົງທຶນເພື່ອອະນາຄົດຂອງ ສປປ ລາວ, ພວກເຮົາຕ້ອງການຮັບປະກັນໃຫ້ຊັບພະຍາກອນຂອງລັດ ໄດ້ຮັບການວາງແຜນ, ຈັດສັນ ແລະ ນຳໃຊ້ຢ່າງມີປະສິດທິຜົນ ເພື່ອສ້າງຜົນໄດ້ຮັບໃຫ້ແກ່ເດັກນ້ອຍ. ການລົງຢ້ຽມຢາມຄັ້ງນີ້, ເຮັດໃຫ້ພວກເຮົາໄດ້ເຫັນວ່າການຕັດສິນໃຈດ້ານນະໂຍບາຍ ແລະ ງົບປະມານກາຍເປັນການບໍລິການສຳລັບຄອບຄົວໃນບ້ານຂອງພວກເຂົາແນວໃດ.

ໄລຍະແຕ່ການຖືພາຈົນເຖິງເດັກອາຍຸຄົບ 2 ປີ ທີ່ເອີ້ນວ່າ 1.000 ວັນ ທຳອິດ ແມ່ນໄລຍະທີ່ໂພຊະນາການ, ການເບິ່ງແຍງ ແລະ ການບໍລິການສຸຂະພາບມີອິດທິພົນຫຼາຍທີ່ສຸດຕໍ່ການເຕີບໂຕ ແລະ ການຮຽນຮູ້ຂອງເດັກ. ຜົນກະທົບນັ້ນ ຈະຕິດຕໍ່ໄປຈົນເຖິງໄວຜູ້ໃຫຍ່. ໃນທົ່ວໂລກ, ໂພຊະນາການໃນໄວເດັກຖືກຖືວ່າເປັນໜຶ່ງໃນການລົງທຶນທີ່ຄຸ້ມຄ່າທີ່ສຸດທີ່ປະເທດໃດໜຶ່ງສາມາດເຮັດໄດ້ເພື່ອປະຊາຊົນຂອງຕົນ. ສ່ວນແບ່ງງົບປະມານໂພຊະນາການແຫ່ງຊາດ ຈາກລັດຖະບານເພີ່ມຂຶ້ນຫຼາຍກວ່າສອງເທົ່າ ຈາກ 7% ໃນປີ 2020 ເປັນ 17% ໃນປີ 2022. ເຖິງຢ່າງໃດກໍຕາມ, ສິ່ງທ້າທາຍຍັງຄົງມີຢູ່, ອີງຕາມການສຳຫຼວດຕົວຊີ້ວັດສັງຄົມລາວ ຄັ້ງທີ III (2023), ເດັກອາຍຸຕ່ຳກວ່າ 5 ປີ ໜຶ່ງໃນສາມຄົນມີພາວະເຕ້ຍ ຫຼື ລວງສູງຕ່ຳກວ່າເກນອາຍຸ ແລະ 11% ມີພາວະຜອມແຫ້ງ ຫຼື ນ້ຳໜັກໜ້ອຍກວ່າເກນເມື່ອທຽບກັບລວງສູງ.

ໂອກາດລົງຢ້ຽມຢາມຄັ້ງນີ້, ຄະນະຜູ້ແທນໄດ້ໃຊ້ເວລາຢູ່ກັບອາສາສະໝັກສາທາລະນະສຸກບ້ານ, ພະນັກງານສາທາລະນະສຸກ ແລະ ຄອບຄົວ ໄດ້ເຫັນວ່າການກວດການເຕີບໂຕຂອງເດັກຢູ່ຊຸມຊົນ, ການປັ່ນປ່ວນການຂາດສານອາຫານ ແລະ ໂຄງການ “ຮັກ ແລະ ເບິ່ງແຍງເດັກທຸກຄົນ” ຂອງສະຫະພັນແມ່ຍິງລາວ ເຂົ້າເຖິງແມ່ ແລະ ເດັກແນວໃດ. ພ້ອມນີ້, ຜູ້ນຳຂັ້ນແຂວງ, ກະຊວງການເງິນ ແລະ ຢູນີເຊັບ ໄດ້ພົບປະປຶກສາຫາລືກັນກ່ຽວກັບງົບປະມານເພື່ອການເລີ່ມຕົ້ນຊີວິດທີ່ມີສຸຂະພາບດີ ໂດຍໄດ້ພິຈາລະນາວ່າວຽກງານໃດຄວນໃຫ້ບຸລິມະສິດ, ຈະນຳໃຊ້ຊັບພະຍາກອນທີ່ມີຢູ່ໃຫ້ເກີດປະໂຫຍດສູງສຸດແນວໃດ ແລະ ຂະແໜງສາທາລະນະສຸກ, ໂພຊະນາການ ແລະ ການບໍລິການສັງຄົມຈະຮ່ວມມືກັນໃຫ້ໃກ້ຊິດຍິ່ງຂຶ້ນແນວໃດ.

ການລົງຢ້ຽມຢາມຄັ້ງນີ້ ມີຂຶ້ນໃນຂະນະທີ່ລັດຖະບານ ແລະ ອົງການສະຫະປະຊາຊາດ ກອງທຶນສຳລັບເດັກ ກຳລັງກະກຽມແຜນງານຮ່ວມມືປະເທດ 2027-2031. ການເລີ່ມຕົ້ນຊີວິດທີ່ມີສຸຂະພາບດີສຳລັບເດັກທຸກຄົນ ແມ່ນໜຶ່ງໃນສີ່ບຸລິມະສິດຂອງແຜນງານ ຄຽງຄູ່ກັບການຮຽນຮູ້ ແລະ ທັກສະ, ການພັດທະນາໄວໜຸ່ມ, ການປັບຕົວ ແລະ ຄວາມທົນທານຕໍ່ການປ່ຽນແປງດິນຟ້າອາກາດ. ທັງສອງຝ່າຍກ່າວວ່າ ເປົ້າໝາຍແມ່ນການເຊື່ອມໂຍງນະໂຍບາຍ, ງົບປະມານ ແລະ ການບໍລິການຜ່ານລະບົບຂອງລັດຖະບານ ເພື່ອໃຫ້ເດັກທຸກໆຄົນໄດ້ລອດຊີວິດ, ເຕີບໂຕ ແລະ ພັດທະນາເຕັມຕາມທ່າແຮງ.

◆ ຂ່າວພາຍໃນ · 13:51 ໂມງ · ອ່ານ 4 ຄັ້ງ

ລະດົມຄວາມເຫັນໃສ່ຮ່າງມະຕິຂອງຄະນະປະຈຳສະພາແຫ່ງຊາດ ແລະ ຮ່າງຂໍ້ຕົກລົງຂອງ ຫສຊ



ທ່ານ ບຸນຈັນ ສີວົງພັນ ໄດ້ກ່າວວ່າ: ກອງປະຊຸມຄັ້ງນີ້ໄດ້ພ້ອມກັນສຸມໃສ່ຄົ້ນຄວ້າ, ແລກປ່ຽນບົດຮຽນເຊິ່ງກັນ ແລະ ກັນ ກ່ຽວກັບຮ່າງມະຕິຂອງຄະນະປະຈຳສະພາແຫ່ງຊາດ ແລະ ຂໍ້ຕົກລົງຂອງຫ້ອງວ່າການສະພາແຫ່ງຊາດ ເພື່ອເປັນເອກະພາບກັນທາງດ້ານທັດສະນະ, ຫຼັກການ ແລະ ໃນທາງປະຕິບັດຕົວຈິງກ່ຽວກັບການຮ່າງສອງເອກະສານດັ່ງກ່າວ ໃຫ້ມີຄວາມຮັດກຸມ, ຖືກກັບສະພາບວຽກງານຕົວຈິງໃນແຕ່ລະເນື້ອໃນທີ່ ຄປຈ ສພຊ ໄດ້ຕົກລົງ, ໃຫ້ທິດຊີ້ນຳ ກໍຄືການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງ ຫສຊ ແລະ ບັນດາກຳມາທິການຕ່າງໆໃນການເປັນເສນາທິການໃຫ້ແກ່ຄະນະປະຈຳສະພາແຫ່ງຊາດ ໃຫ້ມີຄຸນນະພາບ ແລະ ຮັບປະກັນທາງດ້ານເນື້ອໃນ. ນອກຈາກນີ້, ກອງປະຊຸມຈະໄດ້ພ້ອມກັນກວດກາ ແລະ ຕີລາຄາຄືນຄວາມຖືກຕ້ອງ, ຄວາມຮັດກຸມ ແລະ ຄວາມສອດຄ່ອງຂອງໂຄງຮ່າງ, ເນື້ອໃນ ຕະຫຼອດເຖິງເຫດຜົນ ແລະ ຄວາມຈຳເປັນຂອງຮ່າງມະຕິ ແລະ ຂໍ້ຕົກລົງດັ່ງກ່າວ ໄດ້ຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງໃນປັດຈຸບັນ ແລ້ວຫຼືບໍ່, ລະດົມສະຕິປັນຍາລວມໝູ່, ຄວາມຮູ້ຄວາມສາມາດ ແລະ ປະສົບການຕົວຈິງຈາກຜູ້ເຂົ້າຮ່ວມ ເພື່ອປະກອບຄຳຄິດຄຳເຫັນ, ເຈາะจี้ມໃສ່ແຕ່ລະໝວດ, ມາດຕາ, ເນື້ອໃນທີ່ເຫັນວ່າຍັງບໍ່ທັນເປັນເອກະພາບ, ຈະແຈ້ງ, ຖືກຕ້ອງ, ມີຄວາມຊ້ຳຊ້ອນ ຫຼື ອາດຈະບໍ່ທັນສອດຄ່ອງໃນເວລານຳໄປຈັດຕັ້ງປະຕິບັດຕົວຈິງ; ຮຽບຮຽງ ແລະ ປັບປຸງເນື້ອໃນຮ່າງມະຕິ ເຮັດໃຫ້ມີເນື້ອໃນອຸດົມສົມບູນ, ຕິດແໜ້ນກັບເນື້ອໃນແຕ່ລະບັນຫາທີ່ຈະຮ່າງເອກະສານດັ່ງກ່າວໃຫ້ມີຄວາມຮັດກຸມ, ຖືກຕ້ອງຕາມເອກະສານທາງລັດຖະການ, ພ້ອມທັງກຳນົດຫຼັກການ, ວິທີການ ແລະ ມາດຕະການຈັດຕັ້ງປະຕິບັດ ເພື່ອນຳສະເໜີຕໍ່ຂັ້ນເທິງພິຈາລະນາ ແລະ ອະນຸມັດລົງລາຍເຊັນໃນຕໍ່ໜ້າ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດພາຍໃນ ສພຊ ໃຫ້ເປັນເອກະພາບກັນຕາມລະບຽບການ.

ໃນກອງປະຊຸມ, ຜູ້ເຂົ້າຮ່ວມໄດ້ສຸມໃສ່ຄົ້ນຄວ້າ, ປະກອບຄຳຄິດເຫັນ ແລະ ຮຽບຮຽງເນື້ອໃນຮ່າງມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການປະສານງານລະຫວ່າງຫ້ອງວ່າການສະພາແຫ່ງຊາດ ກັບບັນດາກຳມາທິການສະພາແຫ່ງຊາດ, ມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍລະບຽບການດຳເນີນກອງປະຊຸມຄະນະປະຈຳສະພາແຫ່ງຊາດ ແລະ ຮ່າງຂໍ້ຕົກລົງຂອງຫ້ອງວ່າການສະພາແຫ່ງຊາດວ່າດ້ວຍການເຄື່ອນໄຫວຂອງເລຂາທິການນຳສະພາແຫ່ງຊາດ.

ຂ່າວ: ປາກາລັກ

ຂ່າວພາຍໃນ · 13:00 ໂມງ · ອ່ານ 4 ຄັ້ງ

ປະທານປະເທດ ແຫ່ງ ສປປ ລາວ ອ່ານສານອວຍພອນກອງປະຊຸມພຸດທະສາສະໜາໜານໄຫ່ ຄັ້ງທີ 11



- ນ້ອມນະມັດສະການ ພະອາຈານໃຫຍ່ ອິນຊຸມ ປະທານຜູ້ກໍ່ຕັ້ງກອງປະຊຸມໂຕະມົນພຸດທະສາສະໜາໜານໄຫ່.

- ນ້ອມນະມັດສະການ ພະອາຈານໃຫຍ່ ມະຫາ ເວດ ມະເສໄນ ປະທານສູນກາງອົງການພຸດທະສາສະໜາ ສຳພັນ ແຫ່ງ ສປປ ລາວ.

- ນ້ອມນະມັດສະການ ແລະ ເຄົາລົບນັບຖືມາຍັງ ບັນດາຜູ້ນຳທາງພຸດທະສາສະໜາ, ການນຳພັກ-ລັດ, ຜູ້ຊ່ຽວຊານ, ນັກວິຊາການ ແລະ ເພື່ອນມິດພຸດທະ ສາສະນິກະຊົນຈາກບັນດາປະເທດ ແລະ ເຂດແຄວ້ນຈາກ ພາກພື້ນ ແລະ ສາກົນ, ພະເຖຣານຸເຖຣະ ແລະ ບັນດາ ຜູ້ແທນທີ່ນັບຖື ແລະ ຮັກແພງ.

ຂ້າພະເຈົ້າມີຄວາມພາກພູມໃຈຢ່າງຍິ່ງທີ່ອົງການພຸດ ທະສາສະໜາສຳພັນ ແຫ່ງ ສປປ ລາວ ກໍຄື ສປປ ລາວ ໄດ້ ຮັບກຽດເປັນເຈົ້າພາບຮ່ວມກັບສະມາຄົມພຸດທະສາສະໜາ ນະຄອນເສີນເຈິນ ແລະ ວັດຫົງຟ້າ, ສປ ຈີນ ຈັດກອງປະ ຊຸມພຸດທະສາສະໜາໜານໄຫ່ ຄັ້ງທີ 11 ທີ່ນະຄອນຫລວງວຽງຈັນ ສປປ ລາວ ແຕ່ ວັນທີ 25- 30 ຕຸລາ 2026 ພາຍໃຕ້ ຫົວຂໍ້: “ຕົ້ນກຳເນີດອັນດຽວກັນ, ຮ່ວມ ປະນິທານດຽວກັນ, ສູ່ຄວາມຮຸ່ງເຮືອງ ສີວິໄລຮອບດ້ານ” ໃນມື້ນີ້.

ຂ້າພະເຈົ້າຂໍສະແດງຄວາມຊົມເຊີຍ ແລະ ຕີລາຄາສູງຕໍ່ໝາກຜົນອັນເປັນຮູບ ປະທຳຂອງກອງປະຊຸມໃນແຕ່ລະຄັ້ງຜ່ານ ມາທີ່ໄດ້ນຳເອົາປະໂຫຍດແທ້ຈິງແກ່ສັງຄົມ ນັ້ນ ໄດ້ສະແດງໃຫ້ເຫັນເຖິງຄວາມ ພະຍາຍາມອັນບໍ່ຮູ້ອິດຮູ້ເມື່ອຍ ແລະ ການ ອຸທິດກຳລັງແຮງຮອບດ້ານຂອງບັນດາພະ ອາຈານໃຫຍ່ ກໍຄື ຄະນະກຳມະການທຸກ ພາກສ່ວນທີ່ໄດ້ຮ່ວມແຮງຮ່ວມໃຈເຜີຍແຜ່ ພຸດທະສາສະໜາ ກໍຄື ຫລັກຄຳສອນຂອງ ພະພຸດທະເຈົ້າໃຫ້ເຂົ້າເຖິງຈິດໃຈຂອງ ປະຊາຊົນຜູ້ທີ່ເຊື່ອຖືສາສະໜາພຸດນັບມື້ນັບ ກວ້າງຂວາງ.

ໃນນາມຕົວແທນຂອງປະຊາຊົນ ລາວບັນດາເຜົ່າ ກໍຄື ໃນນາມສ່ວນຕົວ, ຂ້າພະເຈົ້າຂໍສົ່ງຄຳອວຍພອນດ້ວຍໄມຕີຈິດ ອັນອົບອຸ່ນ ແລະ ຄວາມຊົມເຊີຍອັນ ປະເສີດມາຍັງກອງປະຊຸມໂຕະມົນພຸດທະ ສາສະໜາໜານໄຫ່ ຄັ້ງທີ 11 ນີ້ຢ່າງສຸດ ອົກສຸດໃຈ.

ຂ້າພະເຈົ້າມີຄວາມເຊື່ອໝັ້ນຢ່າງ ແຮງກ້າວ່າ ກອງປະຊຸມຄັ້ງນີ້, ຈະເປັນ ບາດກ້າວທີ່ສຳຄັນໃນການຮັດແໜ້ນສາຍ ພົວພັນມິດຕະພາບ, ຄວາມສາມັກຄີ ແລະ ການຮ່ວມມືທີ່ດີລະຫວ່າງບັນດາປະເທດທີ່ ເຂົ້າຮ່ວມກອງປະຊຸມໃນຄັ້ງນີ້ ແລະ ຈະນຳ ເອົາຜົນປະໂຫຍດອັນໃໝ່ໃຫຍ່ຫລວງ ແລະ ຄວາມສະຫງົບສຸກມາໃຫ້ແກ່ມວນ ມະນຸດຕາມພຸດທຳຄຳສອນຂອງພະສາສະ ດາສຳມາສຳພຸດທະເຈົ້າ.

ທ້າຍສຸດນີ້, ຂໍອວຍພອນໄຊອັນ ປະເສີດມາຍັງບັນດາພະອາຈານໃຫຍ່ຜູ້ນຳ ທາງພຸດທະສາສະໜາແຕ່ລະປະເທດ ແລະ ເຂດແຄວ້ນ, ພະເຖຣານຸເຖຣະ ແລະ ຜູ້ ເຂົ້າຮ່ວມກອງປະຊຸມທັງໝົດຈົ່ງມີ ສຸຂະພາບແຂງແຮງ, ມີພະລະນາໄມ ສົມບູນ.

ຂໍອວຍພອນໃຫ້ກອງປະຊຸມໂຕະ ມົນພຸດທະສາສະໜາໜານໄຫ່ ຄັ້ງທີ 11 ນີ້ ທີ່ເປີດຂຶ້ນຢູ່ນະຄອນຫລວງວຽງຈັນ ແຫ່ງ ສປປ ລາວ ຈົ່ງປະສົບຜົນສຳເລັດຢ່າງ ງົດງາມ.

ຂ່າວພາຍໃນ · 10:09 ໂມງ · ອ່ານ 3 ຄັ້ງ

ຫາລືການກຽມພ້ອມດ້ານການປະສານງານການໃຫ້ວັກຊີນກັນມະເຮັງປາກມົດລູກທົ່ວປະເທດ



ກອງປະຊຸມຈັດຂຶ້ນໂດຍການເປັນປະທານຂອງ ທ່ານ ດຣ. ພອນປະເສີດ ໄຊຍະມຸງຄຸນ ຫົວໜ້າກົມອະນາ ໄມ ແລະ ສົ່ງເສີມສຸຂະພາບ, ທ່ານ ໄຊຍະເດດ ຊົງມີໄຊ ຮອງຫົວໜ້າກົມສາມັນສຶກສາ ກະຊວງສຶກສາທິການ ແລະ ກິລາ, ມີຫົວໜ້າຫ້ອງການກະຊວງສາທາລະນະສຸກ, ປະທານສະມາຄົມແພດເດັກທົ່ວປະເທດ, ຫົວໜ້າສູນ ສຸຂະພາບແມ່ ແລະ ເດັກ, ຊ່ຽວຊານດ້ານວັກຊີນກັນ ພະຍາດຈາກອົງການອະນາໄມໂລກ, ອົງການຢູນິເຊັບ, ຜູ້ ຕາງໜ້າກອງທຶນກາວີ, ຜູ້ຕາງໜ້າອົງການໂກຟີ ປະຈຳລາວ ແລະ ພາກສ່ວນກ່ຽວຂ້ອງ ເຂົ້າຮ່ວມ.

ໂອກາດນີ້, ຜູ້ເຂົ້າຮ່ວມໄດ້ປຶກສາຫາລືໃນການ ຈັດຕັ້ງປະຕິບັດ ຊຶ່ງຈະເລີ່ມຈາກການປະສານງານລະຫວ່າງ ຂະແໜງການສາທາລະນະສຸກ ກັບຂະແໜງການສຶກສາໃນ ແຕ່ລະຂັ້ນ ກ່ຽວກັບການເກັບກຳລາຍຊື່ເປົ້າໝາຍ ແລະ ການສະໜອງຂໍ້ມູນຂ່າວສານໃຫ້ເຂົ້າເຖິງຊຸມຊົນ, ໂຮງຮຽນ ເພື່ອເຮັດແນວໃດໃຫ້ກຸ່ມເປົ້າໝາຍໄດ້ຮັບວັກຊີນກັນ ພະຍາດ HPV ແລະ ວັກຊີນ Td ເຂັ້ມ ກະຕຸ້ນ ຊຶ່ງເປັນໂອກາດດີໃນການປຶກສາ ຫາລື ແລະ ວາງແຜນຮ່ວມກັນ ເພື່ອສືບຕໍ່ ຜັນຂະຫຍາຍຈຸດດີ ແລະ ຈຸດທີ່ຍັງຄ້າງ ຈາກຄຳແນະນຳໃນບົດສະເໜີ ແລະ ຄຳ ເຫັນ ເພື່ອສືບຕໍ່ການໃຫ້ວັກຊີນກັນ ພະຍາດໄດ້ຮັບໝາກຜົນສຳເລັດຕາມ ຄາດໝາຍປີ 2026. ພ້ອມກັນນີ້, ກໍເປັນ ໂອກາດດີທີ່ແຕ່ລະພາກສ່ວນເຂົ້າມາມີ ສ່ວນຮ່ວມໃນການກະກຽມການຈັດຕັ້ງ ປະຕິບັດການໃຫ້ວັກຊີນກັນມະເຮັງປາກ ມົດລູກ ເປັນຕົ້ນ ກະຊວງສຶກສາທິການ ແລະ ກິລາ, ສາມອົງການຈັດຕັ້ງມະຫາຊົນ, ອົງການອະນາໄມໂລກ, ຢູນິເຊັບ ແລະ ຄູ່ ຮ່ວມພັດທະນາອື່ນໆ.

ໂຄສະນາ

ລົງໂຄສະນາ ໃນ ມະຫາສານ ລາຍວັນ

ໜັງສືພິມ PDF ປະຈຳວັນ · ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ

WhatsApp 020 5888 6182

◆ ເສດຖະກິດ-ສັງຄົມ · 15:06 ໂມງ · ອ່ານ 8 ຄັ້ງ

ຫາລືຮັບຮອງຮ່າງເຄື່ອງມືວຽກງານຕິດຕາມກວດກາ ແລະ ປະເມີນຜົນໂຄງການພັດທະນາແມ່ຍິງ



ກອງປະຊຸມໄດ້ປຶກສາຫາລື ແລະ ພິຈາລະນາບັນດາເນື້ອໃນສຳຄັນ ເປັນຕົ້ນທີບທວນຄວາມຄືບໜ້າການສ້າງເຄື່ອງມືຕິດຕາມ, ລາຍງານຄວາມຄືບໜ້າການດຳເນີນຂະບວນການສ້າງເຄື່ອງມືຕິດຕາມ, ກວດກາ ແລະ ປະເມີນຜົນໃຫ້ສອດຄ່ອງກັບແຜນການ, ເປົ້າໝາຍທີ່ກຳນົດໄວ້ ແລະ ຜົນສຳເລັດຕາມຂອບກຳນົດຕາມສັນຍາ; ພັດທະນາລະບົບ Dashboard ທັນສະໄໝ, ປຶກສາຫາລືກ່ຽວກັບການກຳນົດ ແລະ ຢືນຢັນຕົວຊີ້ວັດຫຼັກ (KPIs), ພ້ອມທັງພັດທະນາລະບົບຖານຂໍ້ມູນສຳລັບຕິດຕາມຜົນການຈັດຕັ້ງປະຕິບັດ ເພື່ອໃຫ້ສາມາດລວບລວມຂໍ້ມູນ, ຕິດຕາມຄວາມຄືບໜ້າ ແລະ ປະເມີນຜົນໄດ້ຢ່າງມີປະສິດທິພາບ, ວັດແທກໄດ້ຊັດເຈນ; ປັບປຸງເອກະສານ ແລະ ແຜນດຳເນີນງານ, ພິຈາລະນາແກ້ໄຂ, ປັບປຸງບັນດາຮ່າງເອກະສານທີ່ກ່ຽວຂ້ອງ, ກຳນົດພາກສ່ວນຮັບຜິດຊອບ ແລະ ແຜນການດຳເນີນງານທີ່ຍັງເຫຼືອໃຫ້ສຳເລັດ ແລະ ສະຫຼຸບການແບ່ງຄວາມຮັບຜິດຊອບຕາມແຜນພັດທະນາແມ່ຍິງລາວ 5 ປີ (2026-2030) ເພື່ອສ້າງຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດຕົວຈິງ ໃນກອບແຜນວຽກແຜນພັດທະນາແມ່ຍິງ ລາວ ຄັ້ງທີ 9 ຂອງສະຫະພັນແມ່ຍິງ ຊຶ່ງ ລວມມີ 9 ເປົ້າໝາຍ, 31 ແຜນວຽກຈຸດສຸມ ແລະ 144 ວຽກຈຸດສຸມ.

ກອງປະຊຸມຄັ້ງນີ້ ຖືເປັນບາດກ້າວສຳຄັນໃນການຍົກລະດັບກົນໄກ ແລະ ເຄື່ອງມືການຕິດຕາມ-ປະເມີນຜົນໃຫ້ມີຄວາມເປັນລະບົບ, ສາມາດວັດແທກຜົນສຳເລັດໄດ້ຢ່າງເປັນຮູບປະທຳ ພ້ອມທັງຊ່ວຍເສີມສ້າງການປະສານງານລະຫວ່າງບັນດາພາກສ່ວນ ແລະ ຍົກສູງປະສິດທິຜົນໃນການຈັດຕັ້ງບັນດາແຜນງານ ແລະ ໂຄງການພັດທະນາແມ່ຍິງໃນຕໍ່ໜ້າໃຫ້ມີຄວາມຍືນຍົງ.

◆ ເສດຖະກິດ-ສັງຄົມ · 15:50 ໂມງ · ອ່ານ 6 ຄັ້ງ

ສະຖານທູດຫວຽດນາມ ໂຄສະນາວຽກງານຄວບຄຸມ ແລະ ມອບ-ຮັບອາວຸດ, ວັດຖຸລະເບີດ



ໃນໂອກາດດັ່ງກ່າວ, ທ່ານ ພັນເອກ ສົມສະນິດ ຈັນທະວົງ ໄດ້ກ່າວວ່າ: ການເຜີຍແຜ່ຄັ້ງນີ້ ຈັດຂຶ້ນເພື່ອຈັດຕັ້ງປະຕິບັດຕາມຄຳສັ່ງຂອງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ວ່າດ້ວຍການເກັບກູ້ອາວຸດປືນ ແລະ ວັດຖຸລະເບີດແນໃສ່ສະກັດກັ້ນ ແລະ ແກ້ໄຂປະກົດການຫຍໍ້ທໍ້ໃນສັງຄົມຈາກການນຳໃຊ້ອາວຸດໂດຍບໍ່ໄດ້ຮັບອະນຸຍາດ ເພື່ອຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມປອດໄພຂອງປະເທດຊາດ. ພ້ອມນີ້, ຍັງໄດ້ຍົກໃຫ້ເຫັນເນື້ອໃນ ແລະ ຂໍ້ກຳນົດທີ່ສຳຄັນໃນການກຳນົດເວລາການຮັບມອບ-ສົ່ງອາວຸດ ຊຶ່ງເລີ່ມແຕ່ວັນທີ 16 ສິງຫາ ຫາ 31 ຕຸລາ 2026 ຖ້າການກຳນົດວັນດັ່ງກ່າວ ຫາກເຈົ້າໜ້າທີ່ກວດພົບເຫັນຈະຖືກດຳເນີນຄະດີຕາມກົດໝາຍຢ່າງເຂັ້ມງວດ. ພ້ອມກັນນັ້ນ, ຍັງມີນະໂຍບາຍຜ່ອນຜັນສຳລັບບຸກຄົນ ຫຼື ອົງການຈັດຕັ້ງໃດທີ່ມີຈິດໃຈສະໝັກໃຈນຳເອົາອາວຸດ ຫຼື ວັດຖຸລະເບີດມາສົ່ງມອບໃຫ້ເຈົ້າໜ້າທີ່ພາຍໃນກຳນົດເວລາດັ່ງກ່າວ ຈະບໍ່ຖືກດຳເນີນຄະດີຕາມກົດໝາຍ.

ພ້ອມນີ້, ຍັງໄດ້ເນັ້ນເຖິງບັນດາຂໍ້ຫ້າມໃນການຫ້າມຄອບຄອງ, ນຳໃຊ້, ມອບ-ຮັບ, ໂອນສິດ ຫຼື ຊື້-ຂາຍອາວຸດ ແລະ ວັດຖຸລະເບີດຜິດກົດໝາຍຢ່າງເດັດຂາດ, ການຢຸດອອກໃບອະນຸຍາດໃຫ້ນຳໃຊ້ປືນກິລາ ແລະ ປືນລ່າເນື້ອທຸກປະເພດ. ສຳລັບຄົນຕ່າງປະເທດ, ຄົນຕ່າງດ້າວ, ຜູ້ບໍ່ມີສັນຊາດ ແລະ ປະຊາຊົນຫວຽດນາມທີ່ດຳລົງຊີວິດຢູ່ ສປປ ລາວ ຕ້ອງມີພັນທະເຄົາລົບ ແລະ ປະຕິບັດຕາມກົດໝາຍຂອງ ສປປ ລາວ ຢ່າງເຂັ້ມງວດຄືກັນກັບພົນລະເມືອງລາວ. ສຳລັບສະຖານທີ່ຮັບມອບສິ່ງແມ່ນສາມາດນຳໄປມອບທີ່ກົມຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງ ຣາຖານ ກະຊວງປ້ອງກັນຄວາມສະຫງົບ, ກອງບັນຊາການ ປກສ ນະຄອນຫຼວງ, ແຂວງ ຫຼື ກອງບັນຊາການ ປກສ ເມືອງ, ນະຄອນທົ່ວປະເທດ.

ໂອກາດນີ້, ທ່ານ ຫງວຽນ ມິນ ເຕີ ໄດ້ເນັ້ນໃຫ້ປະຊາຊົນຫວຽດນາມທຸກຄົນຈົ່ງສືບຕໍ່ເຊີດຊູສະຕິຕື່ນຕົວ, ເປັນແບບຢ່າງທີ່ດີໃນການເຄົາລົບ ແລະ ປະຕິບັດກົດໝາຍຂອງ ສປປ ລາວ ຢ່າງເຂັ້ມງວດ ເພື່ອປະກອບສ່ວນຮັກສາສາຍພົວພັນມິດຕະພາບອັນເປັນມູນເຊື້ອ, ຄວາມສາມັກຄີຮັກແພງ ແລະ ການຮ່ວມມືອັນດີງາມລະຫວ່າງສອງປະເທດໃຫ້ໝັ້ນຄົງທະນົງແກ່ນຍິ່ງໆຂຶ້ນ.

ລາຄານ້ຳມັນ, ເງິນ, ຄຳ, ຫວຍ ແລະ ອາກາດ — ສົດທຸກມື້
ເບິ່ງຕົວເລກລ່າສຸດ ທີ່ mahaxan.com/today · ໜ້າ 15 ໃນສະບັບນີ້

ໂຄສະນາ

ລົງໂຄສະນາ ໃນ ມະຫາສານ ລາຍວັນ
ໜັງສືພິມ PDF ປະຈຳວັນ · ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ
WhatsApp 020 5888 6182

◆ ເສດຖະກິດ-ສັງຄົມ · 16:05 ໂມງ · ອ່ານ 4 ຄັ້ງ

ມອບ-ຮັບປຶ້ມອັດທະນະທຳຂອງເຈົ້ຈຽງໃຫ້ຫ້ອງສະໝຸດແຫ່ງຊາດລາວ



ປຶ້ມທີ່ນຳມາມອບໃນຄັ້ງນີ້, ມີທັງໝົດ 83 ຫົວ, ປະກອບມີ: ປຶ້ມອ່ານຄວາມຮູ້ທົ່ວໄປກ່ຽວກັບວັດທະນະທຳຈີນ, ປຶ້ມສະແດງເຖິງເອກະລັກ ແລະ ພາບພິດຂອງແຂວງເຈ້ຈຽງ, ຜົນງານວັນນະຄະດີເດັກ ແລະ ວັນນະຄະດີພື້ນເມືອງເລື່ອງເດັ່ນທີ່ຕິດພັນກັບປະເທດລາວ ຊຶ່ງປະກອບມີສະບັບພາສາລາວ, ຈີນ ແລະ ພາສາອັງກິດ.

ໂອກາດນີ້ ທ່ານ ສຳລານ ຫຼວງອາໄພ ໄດ້ສະແດງຄວາມຂອບໃຈຕໍ່ຫໍສະໝຸດເຈ້ຈຽງ ສປ ຈີນ ທີ່ໄດ້ນຳເອົາປຶ້ມຈຳນວນດັ່ງກ່າວມາມອບໃຫ້ໃນຄັ້ງນີ້ ຖືເປັນໂອກາດອັນດີເປັນປີແຫ່ງມິດຕະພາບ ລາວ-ຈີນ ແລະ ເປັນສ່ວນໜຶ່ງໃນການປະກອບສ່ວນເຄື່ອນໄຫວສະເຫຼີມສະຫຼອງການຮ່ວມມືການທູດ ສປ ຈີນ ແລະ ສປປ ລາວ ຄົບຮອບ 65 ປີ ຂອງສອງຊາດ ລາວ-ຈີນ ໂດຍສະເພາະສອງຫໍສະໝຸດລະຫວ່າງຫໍສະໝຸດແຂວງເຈ້ຈຽງ ແລະ ຫໍສະໝຸດແຫ່ງຊາດລາວ ຊຶ່ງເປັນຂໍ້ລິເລີ່ມໃນການແລກປ່ຽນປຶ້ມ, ການເຊື່ອມໂຍງ ແລະ ຮັດແໜ້ນມິດຕະພາບການຮ່ວມມື.

ທ່ານ ສຳລານ ຫຼວງອາໄພ ຍັງໃຫ້ຮູ້ອີກວ່າ: ສູນວັດທະນະທຳຈີນ ປະຈຳລາວ ມີບົດບາດສຳຄັນໃນການເປັນຂົວຕໍ່ດ້ານວັດທະນະທຳທີ່ພົວພັນເຖິງການຮ່ວມມືລະຫວ່າງສອງປະເທດ. ການມອບ-ຮັບປຶ້ມຈຳນວນ 83 ຫົວ ໃຫ້ແກ່ຫໍສະໝຸດແຫ່ງຊາດນີ້, ເປັນຂໍ້ມູນທີ່ສຳຄັນຈະເຮັດໃຫ້ເພີ່ມຄັງສາງພຸມປັນຍາຢູ່ໃນຫໍສະໝຸດ ໃຫ້ມີຄວາມອຸດົມສົມບູນ, ມີຄວາມຫຼາກຫຼາຍ ເພື່ອໃຫ້ນັກຮຽນ, ນັກສຶກສາ, ປັນຍາຊົນ ແລະ ຜູ້ສົນໃຈເຂົ້າມາສຶກສາຮຽນຮູ້ວັດທະນະທຳຈີນ ແລະ ໃຊ້ບໍລິການອ່ານໜັງສືພາສາຈີນໃຫ້ຫຼາຍຂຶ້ນໃນອະນາຄົດ.

ທ່ານ ສູ ຢົ່ງເຊິ່ງ ໄດ້ກ່າວວ່າ: ການມອບປຶ້ມຄັ້ງນີ້, ຖືເປັນສາຍໃຍເຊື່ອມໂຍງອັນສຳຄັນໃນການລິເລີ່ມການແລກປ່ຽນ ແລະ ຮັດແໜ້ນສາຍຮັດແຫ່ງມິດຕະພາບ ລະຫວ່າງສອງຫໍສະໝຸດ ລາວ-ຈີນ, ພ້ອມທັງສະແດງຄວາມຫວັງວ່າພາຍໃຕ້ການສະໜັບສະໜຸນຂອງຫໍສະໝຸດແຫ່ງຊາດ ລາວ, ປຶ້ມຊຸດນີ້ຈະຖືກຈັດເປັນ “ຊັ້ນວາງປຶ້ມສະເພາະ” ຫຼື “ມຸມອ່ານໜັງສື” ເພື່ອສ້າງເປັນປ່ອງຢ້ຽມແຫ່ງການຮຽນຮູ້ ແລະ ສຳຜັດກັບວັດທະນະທຳຈີນ ໃຫ້ແກ່ບັນດາເພື່ອນມິດທີ່ຮັກແພງ ແລະ ໃຫ້ຄວາມສົນໃຈຕໍ່ວັດທະນະທຳຈີນ.

◆ ເສດຖະກິດ-ສັງຄົມ · 14:09 ໂມງ · ອ່ານ 4 ຄັ້ງ

ໄຟຟ້າພະລັງງານລົມ ມອນຊູນ ວິນພາວເວີ ປະກອບສ່ວນສົ່ງເສີມການສ້າງເສດຖະກິດຂອງລາວ



ທ່ານ ນະຄຸດ ບົວຂະຈອນ ຜູ້ຈັດການທົ່ວໄປບໍລິສັດ ມອນຊູນວິນພາວເວີ ຈຳກັດ ໄດ້ໃຫ້ສຳພາດເມື່ອບໍ່ດົນນີ້ວ່າ: ໂຄງການພະລັງງານລົມມອນຊູນວິນພາວເວີ ໄດ້ປະກອບສ່ວນສ້າງເສດຖະກິດ, ພັດທະນາພື້ນຖານໂຄງລ່າງຂອງ ສປປ ລາວ ກໍຄື ເມືອງດາກຈຶງ ແຂວງເຊກອງ ຜ່ານການສົ່ງອອກໄຟຟ້າຈາກພະລັງງານໝຸນວຽນ, ຜ່ານການຈ້າງງານຄົນລາວ, ການພັດທະນາພື້ນຖານໂຄງລ່າງ ແລະ ສ້າງລາຍຮັບໃຫ້ລັດຖະບານຕາມຂໍ້ຜູກພັນສຳປະທານ. ໂຄງການພະລັງງານລົມມອນຊູນວິນພາວເວີ ສາມາດຜະລິດພະລັງງານໝຸນວຽນ 600 ເມກາວັດ ໂດຍບໍ່ມີການຍົກຍ້າຍປະຊາຊົນອອກຈາກທີ່ຢູ່ອາໄສ ແລະ ບໍ່ມີຄອບຄົວທີ່ໄດ້ຮັບຜົນກະທົບຮຸນແຮງ, ສ່ວນຊັບສິນ ແລະ ເນື້ອທີ່ທີ່ໄດ້ຮັບຜົນກະທົບ ໄດ້ມີການຊົດເຊີຍຜົນເສຍຫາຍ ແລະ ຊ່ວຍເຫຼືອປັບປຸງຊີວິດການເປັນຢູ່ຂອງປະຊາຊົນທີ່ໄດ້ຮັບຜົນກະທົບກວມ 29 ບ້ານ ໃນແຂວງເຊກອງ ແລະ ແຂວງອັດຕະປື ໃຫ້ມີຊີວິດການເປັນຢູ່ທີ່ດີຂຶ້ນ. ໃນນັ້ນ, ໄດ້ມີການຈ້າງແຮງງານໃນທ້ອງຖິ່ນ, ສົ່ງເສີມພັດທະນາກະສິກຳ, ພື້ນຖານໂຄງລ່າງ, ສາທາລະນະສຸກ ແລະ ການສຶກສາ ໂດຍກຳນົດບຸລິມະສິດຜ່ານການປຶກສາຫາລືກັບປະຊາຊົນ ແລະ ໜ່ວຍງານພາກລັດ.

ໂຄງການພະລັງງານລົມມອນຊູນວິນພາວເວີ ບໍ່ພຽງແຕ່ມີສ່ວນຊ່ວຍຂະຫຍາຍການຜະລິດໄຟຟ້າພະລັງງານສະອາດ-ສີຂຽວ-ເປັນມິດກັບສິ່ງແວດລ້ອມ ແລະ ສ້າງລາຍຮັບຈາກການສົ່ງອອກໄຟຟ້າໃຫ້ແກ່ປະເທດເທົ່ານັ້ນ, ແຕ່ຍັງເຊື່ອມໂຍງການລົງທຶນດ້ານພະລັງງານເຂົ້າກັບການສ້າງວຽກເຮັດງານທຳ, ການພັດທະນາອາຊີບ, ການປັບປຸງພື້ນຖານໂຄງລ່າງ ແລະ ການອະນຸລັກຊັບພະຍາກອນທຳມະຊາດ ໂດຍສະເພາະເມືອງດາກຈຶງ ແຂວງເຊກອງ. ການພັດທະນາດັ່ງກ່າວ ຖືເປັນໂອກາດສຳຄັນໃນການສ້າງເສດຖະກິດທ້ອງຖິ່ນທີ່ເຕີບໂຕຄຽງຄູ່ກັບການຮັກສາສິ່ງແວດລ້ອມ ແລະ ຍົກລະດັບຄຸນນະພາບຊີວິດຂອງປະຊາຊົນໃຫ້ດີຂຶ້ນຢ່າງຍືນຍົງ.

ຄຽງຄູ່ກັນນັ້ນ, ໂຄງການຍັງໄດ້ວາງແຜນຄຸ້ມຄອງ ແລະ ອະນຸລັກຊີວະນາໆພັນຕະຫຼອດໄລຍະ 25 ປີ ໂດຍເນັ້ນການປົກປ້ອງປ່າ, ຟື້ນຟູພື້ນທີ່ເສື່ອມໂຊມ, ຕິດຕາມສັດປ່າ ແລະ ປ້ອງກັນການລ່າສັດ, ການຕັດໄມ້ຜິດກົດໝາຍ ແລະ ໄຟປ່າທີ່ຂາດການຄວບຄຸມ.

ຂ່າວ-ພາບ: ທະນູທອງ

◆ ເຫດການ · 14:29 ໂມງ · ອ່ານ 11 ຄັ້ງ

ສົ່ງແກ້ງສະແກມເມີ້ຈີນ 14 ຄົນ ໃຫ້ຫ້ອງວ່າການກະຊວງປ້ອງກັນຄວາມສະຫງົບ.



ໃນວັນທີ 29 ຕຸລາ 2026, ພະແນກປ້ອງກັນ ເສດຖະກິດ ຫ້ອງຕຳຫຼວດ ກອງບັນຊາການ ປກສ ແຂວງ ສະຫວັນນະເຂດ, ໄດ້ສົ່ງຕົວຜູ້ຖືກຫາ ອາຊະຍາກຳດ້ານອິນ ເຕີເນັດ (ສະແກມເມີ້) ສັນຊາດຈີນ 14 ຄົນ ,ພ້ອມເຄື່ອງ ຂອງກາງກະທຳຜິດຄື: ຄອມພິວເຕີ້ຕັ້ງໂຕະ 38 ໜ່ວຍ ແລະ ໂທລະສັບ 41 ໜ່ວຍ ມອບໃຫ້ຫ້ອງວ່າການກະຊວງ ປ້ອງກັນຄວາມສະຫງົບ ດຳເນີນຄະດີຕາມລະບຽບ ກົດໝາຍ.

ເຈົ້າໜ້າທີ່ກອງບັນຊາການ ປກສ ແຂວງ ສະຫວັນນະ ເຂດ ໃຫ້ຮູ້ວ່າ: ຜູ້ຖືກຫາ ສັນຊາດຈີນ ທີ່ມອບໃຫ້, ຫ້ອງວ່າ ການ ກະຊວງປ້ອງກັນຄວາມສະຫງົບ ແມ່ນຖືກກັກຕົວໃນ ວັນທີ 28 ກັນຍາ 2026, ໂດຍເຈົ້າໜ້າທີ່ພະແນກຕຳຫຼວດ ປ້ອງກັນເສດຖະກິດ ຫ້ອງຕຳຫຼວດ ປກສ ແຂວງ ສົມທົບກັບ ເຈົ້າໜ້າທີ່ ປກສ ນະຄອນໄກສອນພົມວິຫານ, ອົງການໄອ ຍະການປະຊາຊົນ ແຂວງ, ອຳນາດການ ປົກຄອງບ້ານ ແລະ ພາກສ່ວນທີ່ກ່ຽວຂ້ອງ ເຂົ້າກວດຄົ້ນ ຢູ່ສະຖານທີ່ເຮືອນໃຫ້ເຊົ້າ ເຊິ່ງຕັ້ງຢູ່ ບ້ານໂພນສະຫວ່າງໃຕ້ ນະຄອນ ໄກສອນ ພົມວິຫານ ແຂວງສະຫວັນນະ ເຂດ.

——

ຂ່າວກອງບັນຊາການ ປກສ ແຂວງ ສະຫວັນນະເຂດ

ຂ່າວຕ່າງປະເທດ

◆ ຂ່າວຕ່າງປະເທດ · 11:10 ໂມງ · ອ່ານ 15 ຄັ້ງ

ຣັດເຊຍສົ່ງໂດຣນໂຈມຕີສະຖານີລົດໄຟໃນເມືອງດນີໂປ ປະເທດຢູເຄຣນ ເສຍຊີວິດ 14 ຄົນ ບາດເຈັບ 10 ຄົນ



ວັນທີ 29 ຕຸລາ 2026 ໂດຣນ ຂອງຣັດເຊຍໄດ້ໂຈມຕີສະຖານີລົດໄຟຫຼັກ ໃນເມືອງດນີໂປ(Dnipro) ທາງພາກກາງ ຂອງຢູເຄຣນ ໃນຂະນະທີ່ປະຊາຊົນກຳລັງ ລໍຖ້າຂຶ້ນລົດໄຟ ສົ່ງຜົນໃຫ້ມີຜູ້ເສຍຊີວິດ 14 ຄົນ ແລະ ບາດເຈັບອີກ 10 ຄົນ.

ເຈົ້າໜ້າທີ່ຢູເຄຣນລະບຸວ່າ ໃນມື້ ດຽວກັນ ມີປະຊາຊົນທົ່ວປະເທດເສຍ ຊີວິດຈາກການໂຈມຕີຢ່າງໜ້ອຍ 19 ຄົນ ໃນນັ້ນລວມມີເດັກຍິງອາຍຸ 15 ປີ 2 ຄົນ. ເຫດໂຈມຕີສະຖານີລົດໄຟຄັ້ງນີ້ ເປັນສ່ວນ ໜຶ່ງຂອງການໂຈມຕີໂຄງລ່າງພື້ນຖານດ້ານ ຄົມມະນາຄົມ ແລະ ພະລັງງານຂອງ ຣັດເຊຍ ທີ່ສົ່ງຜົນກະທົບຕໍ່ຊີວິດ ພົນລະເຮືອນຢ່າງຕໍ່ເນື່ອງ.

ທ່ານ ໂວໂລດີເມຍ ເຊເລນສກີ ປະ ທານາທິບໍດີຢູເຄຣນ ກ່າວວ່າ ການໂຈມຕີ ຄັ້ງນີ້ເປັນການມຸ່ງເປົ້າໂຈມຕີພົນລະເຮືອນ ໂດຍເຈດຕະນາ ແລະ ເກີດຂຶ້ນໃນຊ່ວງ ດຽວກັບທີ່ກຳລັງດຳເນີນພາລະກິດດ້ານ ມະນຸດສະທຳໃນເມືອງໂອເລຊກີ. ທ່ານຍັງ ກ່າວວ່າ ທ່າທີຂອງຣັດເຊຍສະທ້ອນໃຫ້ ເຫັນວ່າ ຕ້ອງການໃຫ້ສົງຄາມດຳເນີນຕໍ່ໄປ ພ້ອມຮຽກຮ້ອງໃຫ້ປະເທດພັນທະມິດ ເພີ່ມແຮງກົດດັນຕໍ່ຣັດເຊຍ.

ກ່ອນໜ້ານີ້ ທ່ານເຊເລນສກີໄດ້ ປະນາມການໂຈມຕີເມືອງດນີໂປວ່າເປັນ

ຕໍ່ໜ້າ 10

ຣັດເຊຍສົ່ງໂດຣນໂຈມຕີສະຖານີລົດໄຟໃນເມືອງດນີໂປ ປະເທດຢູ... (ຕໍ່ຈາກໜ້າ 9)

ເຫດການທີ່ໜ້າສະເທືອນໃຈ ແລະ ຮຽກຮ້ອງໃຫ້ເພີ່ມມາດຕະການຂ້ຳບາດ ເພື່ອປ້ອງກັນບໍ່ໃຫ້ເກີດການໂຈມຕີຄັ້ງຕໍ່ໄປ.

ຂະນະດຽວກັນ ນັບຕັ້ງແຕ່ວັນອັງຄານກ່ອນໜ້ານີ້ ຣັດເຊຍ ແລະ ຢູເຄຣນໄດ້ປະຕິບັດຕາມຂໍ້ຕົກລົງຢຸດຍິງໃນພື້ນທີ່ທາງພາກໃຕ້ຂອງແຄວ້ນເຄີຊອນ ໂດຍມີ ເມລາເນຍ ທຣຳ ສຸພາບສະຕີອັນດັບໜຶ່ງຂອງສະຫະລັດ ເປັນຜູ້ປະສານງານ ເພື່ອເປີດທາງໃຫ້ຄວາມຊ່ວຍເຫຼືອດ້ານມະນຸດສະທຳທີ່ຈຳເປັນຮີບດ່ວນ ເຂົ້າໄປຍັງເມືອງໂອເລຊກີ ເຊິ່ງຢູ່ພາຍໃຕ້ການຄວບຄຸມຂອງຣັດເຊຍ.

ທີ່ມາ: AFP

ຂ່າວຕ່າງປະເທດ · 15:50 ໂມງ · ອ່ານ 14 ຄັ້ງ

ການປະທ້ວງໃນທົ່ວເອີຣົບ ເມື່ອຄົນຮຸ່ນໃໝ່ບໍ່ເຊື່ອວ່າ ອະນາຄົດຈະດີກວ່າປັດຈຸບັນ



ຈາກຝຣັ່ງ, ແບນຊິກ, ອິຕາລີ ໄປຈົນເຖິງສະເປນ ແລະ ໂປຕຸເກດ ການປະທ້ວງທີ່ເກີດຂຶ້ນໃນຫຼາຍປະເທດຂອງເອີຣົບ ອາດມີຈຸດເລີ່ມຕົ້ນທີ່ແຕກຕ່າງກັນ ແຕ່ກຳລັງສະທ້ອນໃຫ້ເຫັນເຖິງຄວາມບໍ່ພໍໃຈທີ່ຄ້າຍຄືກັນ ນັ້ນຄື ຄ່າຄອງຊີບທີ່ສູງຂຶ້ນ, ການຫາທີ່ຢູ່ອາໄສທີ່ຍາກຂຶ້ນ, ລະບົບການສຶກສາທີ່ຕ້ອງການງົບປະມານເພີ່ມຂຶ້ນ ແລະ ຕະຫຼາດແຮງງານທີ່ບໍ່ສາມາດຮັບປະກັນໄດ້ວ່າ ຄົນຮຸ່ນໃໝ່ຈະມີຊີວິດທີ່ໝັ້ນຄົງກວ່າຄົນຮຸ່ນກ່ອນ

“ຂ້ອຍເຫັນຄວາມຄ້າຍຄືກັນຫຼາຍກວ່າຄວາມແຕກຕ່າງ” ໜຶ່ງໃນຜູ້ໃຫ້ສຳພາດກ່າວກັບ CNN ໂດຍຊີ້ວ່າ ສຽງຮຽກຮ້ອງຈາກຄົນຮຸ່ນໃໝ່ບໍ່ໄດ້ຈຳກັດຢູ່ພຽງບັນຫາການສຶກສາ ແລະ ມະຫາວິທະຍາໄລເທົ່ານັ້ນ ແຕ່ຍັງລວມເຖິງຄ່າຄອງຊີບ ແລະ ທີ່ຢູ່ອາໄສ ຊຶ່ງກາຍເປັນບັນຫາສຳຄັນໃນຊີວິດປະຈຳວັນ

ສຽງຮຽກຮ້ອງໃນລັກສະນະດຽວກັນນີ້ ຍັງປາກົດໃນການຊຸມນຸມຂອງນັກສຶກສາອິຕາລີ ເມື່ອ ຊາບຣິນາ ບຣິຊໂຊລາ ຜູ້ນຳສະຫະພັນການສຶກສາ ຮຽກຮ້ອງໃຫ້ປະຊາຊົນຮ່ວມກັນສົ່ງສຽງຮຽກຮ້ອງເພື່ອໂຮງຮຽນທີ່ປອດໄພ, ການເຮັດວຽກທີ່ມີກຽດສັກສີ, ລະບົບສາທາລະນະສຸກ ແລະ ຄວາມເປັນທຳໃນສັງຄົມ

ຈູລຽສ ຟິນເທລມັນ ຜູ້ຮ່ວມກໍ່ຕັ້ງ ແລະ ບັນນາທິການບໍລິຫານຂອງຈົດໝາຍຂ່າວ The European Correspondent ໃຫ້ທັດສະນະວ່າ ການປະທ້ວງຄັ້ງນີ້ສະທ້ອນໃຫ້ເຫັນເຖິງຄວາມອັດອັ້ນຕັນໃຈປະການໜຶ່ງ ນັ້ນຄືຄວາມຮູ້ສຶກວ່າ ການເມືອງຂອງເອີຣົບລົ້ມເຫຼວໃນການສ້າງຜົນລັບທີ່ດີໃຫ້ແກ່ຄົນຮຸ່ນຕໍ່ໄປ

“ສິ່ງທີ່ພວກເຮົາກຳລັງເຜີຍພົບຢູ່ໃນຂະນະນີ້ ຄືການທີ່ຄຳໝັ້ນສັນຍາຂອງລະບອບປະຊາທິປະໄຕເສລີ ທີ່ເຄີຍບອກວ່າ ຄົນຮຸ່ນຕໍ່ໄປຈະມີຊີວິດຄວາມເປັນຢູ່ທີ່ດີກວ່າຄົນຮຸ່ນປັດຈຸບັນ ບັດນີ້ຄຳໝັ້ນສັນຍາດັ່ງກ່າວກັບບໍ່ເປັນຄວາມຈິງອີກຕໍ່ໄປ”

ນອກຈາກນີ້ ຍັງມີບັນຫາດ້ານການສຶກສາ, ຄ່າເຊົ່າ ແລະ ລາຄາທີ່ຢູ່ອາໄສຕະຫຼອດຮອດຕະຫຼາດແຮງງານທີ່ຂາດຄວາມໝັ້ນຄົງ ຊຶ່ງສ່ວນໜຶ່ງເປັນຜົນມາຈາກການທີ່ປັນຍາປະດິດ (AI) ເຂົ້າມາມີບົດບາດຫຼາຍຂຶ້ນ ຈຶນເຮັດໃຫ້ຄວາມຕ້ອງການຕຳແໜ່ງວຽກລະດັບເລີ່ມຕົ້ນຫຼຸດລົງ ນອກຈາກນັ້ນ ຍັງມີວິກິດການດ້ານສະພາບອາກາດ ທີ່ສົ່ງຜົນໃຫ້ສະພາບອາກາດທົ່ວໂລກປ່ຽນແປງຜິດປົກກະຕິ ປັດໄຈເຫຼົ່ານີ້ລ້ວນແຕ່ສົ່ງຜົນໃຫ້ຄົນໜຸ່ມສາວໃນລຸ້ນ Gen Z ອອກມາຮ່ວມການປະທ້ວງ

ປັດຈຸບັນ ຫຼາຍປະເທດໃນເອີຣົບກຳລັງເກີດການປະທ້ວງ ບໍ່ວ່າຈະເປັນຝຣັ່ງ, ອານບານີ, ອິຕາລີ, ສະເປນ ແລະ ໂປຕຸເກດ ຄວາມບໍ່ພໍໃຈໃນສັງຄົມກຳລັງເກີດຂຶ້ນໃນຊ່ວງເວລາທີ່ລັດຖະບານຂອງຫຼາຍປະເທດກຳລັງປະເຊີນຂໍ້ຈຳກັດດ້ານງົບປະມານ ໂດຍປະເທດທີ່ເກີດການປະທ້ວງຕ່າງກຳລັງປະເຊີນກັບແຮງກົດດັນທາງເສດຖະກິດ ແລະ ພາລະໜີ້ສາທາລະນະທີ່ຢູ່ໃນລະດັບສູງ ເຮັດໃຫ້ການເພີ່ມງົບປະມານເພື່ອແກ້ໄຂບັນຫາສັງຄົມເຮັດໄດ້ຍາກຂຶ້ນ

ດັ່ງນັ້ນ ໂຈດທ້າທາຍຂອງລັດຖະບານເອີຣົບ ຈຶ່ງມີຄວາມສັບຊ້ອນຫຼາຍກວ່າພຽງແຕ່ການຮັບມືກັບຜູ້ຊຸມນຸມ ເພາະຕ້ອງຈັດການທັງຄວາມຄາດຫວັງຂອງປະຊາຊົນ, ຄວາມໝັ້ນຄົງທາງເສດຖະກິດ ແລະ ຂໍ້ຈຳກັດໃນການໃຊ້ຈ່າຍຂອງພາກລັດໄປພ້ອມໆ ກັນ

ໂຄສະນາ

ບໍ່ມີເວລາອ່ານ? ກົດຟັງໄດ້ເລີຍ

ທຸກຂ່າວໃນ mahaxan.com ມີສຽງອ່ານພາສາລາວ — ຟັງຂະນະຂັບລົດ ຫຼື ເຮັດວຽກ. ເປີດຂ່າວໃດກໍໄດ້ ແລ້ວກົດ ▶ ຟັງ.

ຂ່າວຕ່າງປະເທດ · 10:56 ໂມງ · ອ່ານ 10 ຄັ້ງ

ສານຈີນຕັດສິນປະຫານຊີວິດ ອະດີດເຈົ້າໜ້າທີ່ລັດຮັບສິນບົນກວ່າ 400 ລ້ານຢວນ



ສານປະຊາຊົນຂັ້ນກາງເມືອງເສີງຕຸ ແຂວງເສສວນ ທາງຕາເວັນຕົກສຽງໃຕ້ຂອງຈີນ ໄດ້ມີຄຳຕັດສິນປະຫານຊີວິດ ທ້າວ ຫວາງ ຮຸ່ຍໝິນ ອະດີດເຈົ້າໜ້າທີ່ອາວຸໂສດ້ານການກວດສອບວິໄນ ປະຈຳຄະນະກຳກັບດູແລຫຼັກຊັບແຫ່ງຊາດຈີນ ໃນຄະດີຮັບສິນບົນ ໂດຍໃຫ້ລໍຖ້າການປະຫານຊີວິດເປັນເວລາ 2 ປີ ແລະຫຼັງຈາກຄົບກຳນົດ ຈະປ່ຽນໂທດເປັນຈຳຄຸກຕະຫຼອດຊີວິດ ພ້ອມທັງຖອນສິດທາງການເມືອງຕະຫຼອດຊີວິດ ແລະຍຶດຊັບສິນສ່ວນຕົວທັງໝົດ.

ສານລະບຸວ່າ ຫວາງ ຮຸ່ຍໝິນ ໄດ້ອາໄສຕຳແໜ່ງໜ້າທີ່ຂອງຕົນໃນເຂດປົກຄອງຕົນເອງຊົນຈຽງອຸຍກຸ ແລະ ຄະນະກຳກັບດູແລຫຼັກຊັບແຫ່ງຊາດຈີນ ເພື່ອຊ່ວຍເຫຼືອອົງກອນ ແລະບຸກຄົນຕ່າງໆ ໃນຫຼາຍດ້ານ ເຊັ່ນ ການດຳເນີນທຸລະກິດ ແລະການລະດົມທຶນ ເພື່ອແລກກັບການຮັບເງິນ ແລະຊັບສິນໂດຍມິຊອບ ລວມມູນຄ່າກວ່າ 436 ລ້ານຢວນ ຫຼືຄິດເປັນເງິນໄທກວ່າ 2,200 ລ້ານບາດ ຊຶ່ງສ້າງຄວາມເສຍຫາຍຢ່າງຮ້າຍແຮງຕໍ່ຜົນປະໂຫຍດຂອງລັດ ແລະ ປະຊາຊົນ ສານຈຶ່ງມີຄຳຕັດສິນໃຫ້ປະຫານຊີວິດ.

ແນວໃດກໍຕາມ ຫວາງໄດ້ສະແດງຄວາມສຳນຶກຜິດ ແລະຍອມຮັບສາລະພາບ ພ້ອມທັງໃຫ້ຄວາມຮ່ວມມືໃນການເປີດເຜີຍຂໍ້ເທັດຈິງກ່ຽວກັບການທຸຈະລິດເພີ່ມເຕີມ ແລະຍອມຮັບຄວາມຜິດພ້ອມສະແດງຄວາມສຳນຶກຜິດ ສານຈຶ່ງມີຄຳຕັດສິນໃຫ້ລໍຖ້າການປະຫານຊີວິດເປັນເວລາ 2 ປີ.

ຂ່າວຕ່າງປະເທດ · 13:52 ໂມງ · ອ່ານ 10 ຄັ້ງ

Binance ຖືກແຮັກຄັ້ງໃຫຍ່ ກະທົບກວ່າ 2.12 ແສນລ້ານບາດ-ອາຍັດສິນຊັບແລ້ວ



Binance ແພລດຟອມຊື້ຂາຍຄຣິບໂຕເຄິເຣນຊີລາຍໃຫຍ່ທີ່ສຸດຂອງໂລກ ເປີດເຜີຍວ່າ ເກີດເຫດການດ້ານຄວາມປອດໄພໃນແພລດຟອມ Binance.com ເຊິ່ງສົ່ງຜົນກະທົບຕໍ່ສິນຊັບດິຈິຕອນມູນຄ່າປະມານ 6,300 ລ້ານໂດລາສະຫະລັດ ຫຼື ລາວ 2.12 ແສນລ້ານບາດ ໂດຍບໍລິສັດລະບຸວ່າ ເບື້ອງຕົ້ນພົບຄວາມເປັນໄປໄດ້ວ່າເຫດການດັ່ງກ່າວກ່ຽວຂ້ອງກັບການຖືກແຮັກລະບົບ ແລະ ມີການຖອນສິນຊັບອອກໄປໂດຍບໍ່ໄດ້ຮັບອະນຸຍາດ.

Binance ລະບຸວ່າ ການກວດສອບເບື້ອງຕົ້ນພົບວ່າ ຜູ້ໂຈມຕີອາດໃຊ້ຊ່ອງໂຫວ່ຈາກຄອມພິວເຕີແລັບທ໊ອບຂອງວິກສະວະກອນລາຍໜຶ່ງທີ່ຖືກເຈາะລະບົບ ກ່ອນນຳມານຳໃຊ້ດຳເນີນການຖອນສິນຊັບໂດຍບໍ່ໄດ້ຮັບອະນຸຍາດ ຢ່າງໃດກໍຕາມ ຍັງບໍ່ມີການເປີດເຜີຍລາຍລະອຽດທີ່ຊັດເຈນກ່ຽວກັບວິທີການໂຈມຕີ ແລະ ຢູ່ລະຫວ່າງການສອບສວນ.

ບໍລິສັດລະບຸວ່າ ສາມາດປະສານງານກັບແພລດຟອມຊື້ຂາຍຄຣິບໂຕເຄິເຣນຊີ ແລະ ພັນທະມິດໃນອຸດສາຫະກຳ ເພື່ອອາຍັດສິນຊັບທີ່ກ່ຽວຂ້ອງໄດ້ແລ້ວປະມານເຄິ່ງໜຶ່ງຂອງມູນຄ່າທີ່ໄດ້ຮັບຜົນກະທົບ ໂດຍຕົວເລກດັ່ງກ່າວອາດເພີ່ມຂຶ້ນອີກເມື່ອມີການຕິດຕາມ ແລະ ກວດສອບທຸລະກຳເພີ່ມເຕີມ ພ້ອມຢືນຢັນວ່າຈະຮັບຜິດຊອບຄວາມເສຍຫາຍທັງໝົດທີ່ເກີດຂຶ້ນ.

ດ້ານບໍລິສັດ Chainalysis ຜູ້ໃຫ້ບໍລິການວິເຄາะຂໍ້ມູນບົນເຄືອຂ່າຍບລັອກເຊນ ປะเมินว่า มูลค่าสินຊັบที่ถูกขะโมยในขะนะเกิดเหตุแม่นยู่ที่ปะมาน 5,912 ล้านโดลาสะหะลัด เชื่งหากติอเลกดั่งก่าอได้รับการยืนยัน จะเธ็ดให้เหตุการนี้มีมูนค่าสูงกว่าการโจมตีแพลดฟอม Bybit เมื่อเดือนกุมพา 2025 เชื่งมีสินซับถูกขะโมยไป 1,500 ล้านโดลาสะหะลัด และ เชื่อมโยงกับแฮักเกิที่มีถามก่ากี่ยวข้องกับเก๊าหลีเหนือ.

ต่มาในช่วงเอลาปะมาน 00:30 นาที ตามเอลาstandard กธีบิดของอันสุภ Binance ปะกาดละงับการฝาก และ ถอนสินซับทั้งหมดเป็นการชั่วคาว เพื่อให้ทีมงานกวดสอบถามปอดไพ, อายัดสินซับที่ก่ากี่ยวข้อง และ ปะสานงานกับหน่วยงานบังคับใช้กิดหมาย โดยยืนยันว่าจะเปิดให้บริการอีกครั้งเมื่อมั่นใจว่าละบบมีถามปอดไพ.

ขะนะที่ สางเผิง จ้าว หรือ CZ อะดิดผู้บริหานสูงสุดของ Binance เชื่งยังถิงเป็นผู้ถือหุ้นลายใหย่ของบริษัท ก่าอผ่านแพลดฟอม X ว่า เหตุการนี้ถือว่าเป็นการแฮักละบบแท้ พร้อมประเมินว่าความเสียหายทั้งหมดอาดสูงกว่า 1,000 ล้านโดลาสะหะลัด.

ด้านบริษัทผู้ออกหลักทรัพย์คริปโตเคิเรนซีรายใหญ่ต่างดำเนินมาตะการอายัดสินซับที่เชื่อมโยงกับเหตุการดังกล่าว โดย เป๋าโล อาโดอิโน ประทานเจ้าหน้าที่บริหารของ Tether เปิดเผยว่า บริษัทได้อายัดสินซับที่ก่ากี่ยวข้องประมาณ 1,600 ล้านโดลาสะหะลัด.

ที่มา: BBC

โฆสะนา
ลงโฆสะนา ใน ມะหาสาน ลายวัน
ໜังสือพิม PDF ปะจำวัน · จองเป็นลายวัน, ลายอาทิด หื ลายเดือน · ทีมงานออกแบบให้ฟรี
WhatsApp 020 5888 6182

ຂ່າວຕ່າງປະເທດ · 16:18 ໂມງ · ອ່ານ 9 ຄັ້ງ

ປະຊາຊົນອິນໂດເນເຊຍ ສະຫຼອງຝົນຕົກ ຫຼັງຜະເຊີນໝອກຄວັນພິດຈາກໄຟປ່າມາດົນຫຼາຍເດືອນ



ປະຊາຊົນ ແລະ ເຈົ້າໜ້າທີ່ດັບໄຟປ່າ ໃນເມືອງປາ ລັງກາ ຣາຍາ (Palangkaraya) ເທິງເກາະບອກນີໂອ (Borneo) ຂອງປະເທດອິນໂດເນເຊຍ ຕ່າງພາກັນອອກ ມາຟ້ອນລຳ ແລະ ສະແດງຄວາມຍິນດີ ຫຼັງຈາກມີຝົນ ຕົກລົງມາຊ່ວຍບັນເທົາວິກິດການໝອກຄວັນພິດ ທີ່ປົກ ຄຸມພື້ນທີ່ມານານຫຼາຍເດືອນ. ໃນຂະນະດຽວກັນ, ລາຍ ງານການວິໄຈປະເມີນວ່າ ມົນລະພິດຈາກຄວັນໄຟປ່າໄດ້ ເຮັດໃຫ້ມີຜູ້ເສຍຊີວິດປະມານ 3,560 ຄົນທົ່ວປະເທດ ໃນເດືອນກັນຍາທີ່ຜ່ານມາ ແລະ ປະຊາຊົນເກືອບ 58 ລ້ານຄົນ ຕ້ອງສູດດົມອາກາດທີ່ມີຄຸນນະພາບຕັ້ງແຕ່ລະດັບ ທີ່ເລີ່ມເປັນອັນຕະລາຍ ໄປຈົນເຖິງຂັ້ນເປັນອັນຕະລາຍ ຮ້າຍແຮງຕໍ່ສຸຂະພາບ.

ປະຊາຊົນ ແລະ ເຈົ້າໜ້າທີ່ດັບໄຟປ່າ ໃນເມືອງປາ ລັງກາ ຣາຍາ ເຊິ່ງເປັນເມືອງເອກຂອງແຂວງກາລິມັນຕັນ ກາງ (Central Kalimantan) ເທິງເກາະບອກນີໂອ ຂອງອິນໂດເນເຊຍ ຕ່າງພາກັນອອກມາດ້ານນອກ ເພື່ອ ຟ້ອນລຳ ແລະ ສົ່ງສຽງສະແດງຄວາມຍິນດີ ຫຼັງຈາກມີຝົນຕົກລົງມາໃນໄລຍະສັບດານີ້ ເຊິ່ງຊ່ວຍບັນເທົາສະຖານະການໝອກ ຄວັນພິດ ທີ່ປົກຄຸມຕິວເມືອງມານານຫຼາຍ ເດືອນ ຈາກເຫດໄຟປ່າທີ່ເກີດຂຶ້ນຕັ້ງແຕ່ ເດືອນສິງຫາ.

ໂດຍເຈົ້າໜ້າທີ່ດັບໄຟປ່າອາສາ ສະໝັກ ທີ່ມີຄວາມອິດເມື່ອຍຈາກການ ຕໍ່ສູ້ກັບແປວໄຟ ຕ່າງພາກັນໂດດຫຼິ້ນໃນ ແອງນ້ຳ ແລະ ກົ້ມລົງຈູບພື້ນດິນເພື່ອ ສະແດງຄວາມຂອບໃຈ ໃນຂະນະທີ່ຝົນ ຕົກລົງມາອີກລະລອກ. ທ່ານ ລຸກມານ ເອລ ຮາຄິມ (Lukman El Hakim) ເຈົ້າໜ້າທີ່ດັບໄຟປ່າ ໄດ້ເປີດເຜີຍຕໍ່ສຳນັກ ຂ່າວ ເອເອັຟພີ (AFP) ວ່າ: "ທຸກຄົນ ຮູ້ສຶກດີໃຈຫຼາຍ ຈຶນພາກັນກົ້ມຂາບເພື່ອ ສະແດງຄວາມຂອບໃຈ ພ້ອມທັງກ່າວ ສັນລະເສີນພະຜູ້ເປັນເຈົ້າ ທີ່ໃນທີ່ສຸດຝົນກໍ ຕົກລົງມາ".

ໃນໄລຍະຫຼາຍອັນທີ່ຜ່ານມາ, ມີຝົນ ຕົກເປັນໄລຍະໃນເມືອງປາລັງກາ ຣາຍາ ເຊິ່ງຜະເຊີນກັບໄຟປ່າທີ່ຮຸນແຮງຢ່າງຕໍ່ເນື່ອງ ຕັ້ງແຕ່ເດືອນສິງຫາທີ່ຜ່ານມາ. ໂດຍ ດັດຊະນີຄຸນນະພາບອາກາດ (AQI) ຂອງ ເມືອງດັ່ງກ່າວ ໄດ້ພຸ່ງສູງເຖິງ 4,000 ຈຸດ ໃນເດືອນນີ້ ເຊິ່ງຖືເປັນລະດັບສູງສຸດເທົ່າທີ່ ເຄີຍມີການກວດວັດມາ ແລະ ສູງກວ່າ ເກນທີ່ກະຊວງສິ່ງແວດລ້ອມກຳນົດວ່າເປັນ ລະດັບອັນຕະລາຍຕໍ່ສຸຂະພາບເຖິງ 13 ເທົ່າ.

ຕະຫຼອດໄລຍະວິກິດການໄຟປ່າ, ມີ ປະຊາຊົນໃນເມືອງປາລັງກາ ຣາຍາ ເຂົ້າຮັບ ການຮັກສາອາການຕິດເຊື້ອໃນລະບົບທາງ ເດີນຫາຍໃຈແລ້ວຫຼາຍກວ່າ 11,000 ຄົນ, ໃນຂະນະທີ່ໝອກຄວັນຍັງໄດ້ແຜ່ ກະຈາຍໄປສົ່ງຜົນກະທົບຕໍ່ປະເທດເພື່ອນ ບ້ານຂອງອິນໂດເນເຊຍນຳອີກ.

ອົງການອະນາໄມໂລກ ຫຼື WHO ລະບຸວ່າ: ການສຳຜັດກັບມົນລະພິດທາງ ອາກາດ ໂດຍສະເພາະຝຸ່ນລະອອງຂະໜາດ ນ້ອຍ PM2.5 ໃນລະດັບສູງ ມີຄວາມ ເຊື່ອມໂຍງກັບຄວາມສ່ຽງທີ່ເພີ່ມຂຶ້ນຕໍ່ການ ເຈັບປ່ວຍ ແລະ ການເສຍຊີວິດກ່ອນໄວ ອັນຄວນ.

ນອກຈາກນີ້, ມີຜູ້ເສຍຊີວິດຢ່າງ ໜ້ອຍ 11 ຄົນ ຈາກການປະຕິບັດໜ້າທີ່ ດັບໄຟປ່າໃນອິນໂດເນເຊຍ ໂດຍລາຍຫຼ້າ ສຸດແມ່ນເຈົ້າໜ້າທີ່ພິທັກປ່າ ອາຍຸ 45 ປີ ເຊິ່ງເສຍຊີວິດຍ້ອນຖືກຕົ້ນໄມ້ລົ້ມທັບ ໃນ ຂະນະທີ່ກຳລັງຕໍ່ສູ້ກັບໄຟປ່າ ຢູ່ເຂດຕານາ ໂທຣາຈາ (Tana Toraja) ແຂວງສຸລາ ເວສີໃຕ້ (South Sulawesi) ເມື່ອວັນ ພຸດທີ່ຜ່ານມາ (28 ຕຸລາ).

ເຖິງຢ່າງໃດກໍຕາມ, ລັດຖະບານ ອິນໂດເນເຊຍກໍໄດ້ອອກມາຊີ້ແຈງໃນວັນ ພຸດ ເພື່ອປົກປ້ອງແນວທາງການຮັບມືກັບ ໄຟປ່າຂອງຕົນ ໂດຍລະບຸວ່າ ໄດ້ລະດົມ ປະຊາຊົນ ແລະ ເຈົ້າໜ້າທີ່ຫຼາຍກວ່າ 72,000 ຄົນ ເຂົ້າຮ່ວມປະຕິບັດການເຮັດ ຝົນທຽມ ແລະ ດັບໄຟປ່າ, ພ້ອມທັງສົ່ງ ແພດ ແລະ ບຸກຄະລາກອນສາທາລະນະ ສຸກຫຼາຍກວ່າ 2,100 ຄົນ ລົງປະຕິບັດ ງານໃນພື້ນທີ່ທີ່ໄດ້ຮັບຜົນກະທົບຢ່າງໜັກ ໜ່ວງ ແລະ ໄດ້ແຈກຢາຍຜ້າອັດປາກ-ອັດ ດັງ ໄປແລ້ວ 5.3 ລ້ານອັນ.

(ທີ່ມາ: AFP)

ຂ່າວຕ່າງປະເທດ · 15:50 ໂມງ · ອ່ານ 8 ຄັ້ງ

ສະຫະລັດ ຈັບມືຍີ່ປຸ່ນ ຕັ້ງໂຮງງານຜະລິດຂີປະນາວຸດ AMRAAM ສຳລັບເຄື່ອງບິນ F-35



ວານນີ້ (29 ຕຸລາ 2026) ສຳນັກຂ່າວ JANES ຂອງອັງກິດລາຍງານວ່າ ສະຫະລັດອາເມລິກາ ແລະ ຍີ່ປຸ່ນ ໄດ້ບັນລຸຂໍ້ຕົກລົງໃນການຈັດຕັ້ງໂຮງງານປະກອບຂັ້ນສຸດທ້າຍ ແລະ ກວດສອບຄວາມພ້ອມໃຊ້ງານ (FACO) ສຳລັບຂີປະ ນາວຸດອາກາດສູ່ອາກາດໄລຍະປານກາງຂັ້ນສູງແບບ AIM-120 (AMRAAM) ຂຶ້ນໃນປະເທດຍີ່ປຸ່ນ.

ຂໍ້ຕົກລົງດັ່ງກ່າວມີຂຶ້ນພາຍຫຼັງການຫາລືລະຫວ່າງ ທ່ານ ຊິນຈິໂຣ ໂຄອິຊຸມິ ລັດຖະມົນຕີວ່າການກະຊວງ ປ້ອງກັນປະເທດຍີ່ປຸ່ນ ແລະ ທ່ານ ພີທ ເຮກເຊທ ລັດຖະມົນຕີວ່າການກະຊວງສົງຄາມສະຫະລັດ ເມື່ອວັນທີ 28 ຕຸລາ 2026 ນອກຮອບການປະຊຸມລັດຖະມົນຕີ ປ້ອງກັນປະເທດອາຊຽນ ກັບ ລັດຖະມົນຕີປ້ອງກັນປະເທດ ປະເທດຄູ່ເຈລະຈາ (ASEAN Defence Ministers' Meeting Plus) ນະ ປະເທດຟິ ລິບປິນ.

“ນີ້ຄືຂໍ້ຕົກລົງຄັ້ງປະຫວັດສາດທີ່ບໍ່ ພຽງແຕ່ຈະສ້າງຫຼັກປະກັນໃນການຈັດຫາ ຍຸດໂທປະກອນທີ່ຈຳເປັນສຳລັບທັງຍີ່ປຸ່ນ ແລະ ສະຫະລັດ ເທົ່ານັ້ນ ແຕ່ຍັງຈະ ຊ່ວຍເສີມສ້າງຄວາມເຂັ້ມແຂງໃຫ້ກັບຖານ ອຸດສາຫະກຳປ້ອງກັນປະເທດຂອງຍີ່ປຸ່ນ ອີກດ້ວຍ” ທ່ານ ໂຄອິຊຸມິ ກ່າວໃນ ລະຫວ່າງການຖະແຫຼງຂ່າວ.

ທ່ານ ໂຄອິຊຸມິ ກ່າວເສີມວ່າ ຂີປະ ນາວຸດດັ່ງກ່າວມີ “ຄວາມສຳຄັນຢ່າງຍິ່ງ ສຳລັບເຄື່ອງບິນຮົບ F-35” ແລະ ເປັນ ສ່ວນໜຶ່ງຂອງປະຕິບັດການ ‘Supercharge’ ເຊິ່ງເປັນຂໍ້ລິເລີ່ມ ລະຫວ່າງສະຫະລັດ ແລະ ຍີ່ປຸ່ນ ເພື່ອ ຮັດແໜ້ນຄວາມຮ່ວມມືດ້ານ ຍຸດໂທປະກອນ ແລະ ເຕັກໂນໂລຊີການ ປ້ອງກັນປະເທດ ຢ່າງໃດກໍຕາມ ທ່ານບໍ່ໄດ້ ເປີດເຜີຍສະຖານທີ່ຕັ້ງຂອງໂຮງງານທີ່ມີ

ຕໍ່ໜ້າ 13

ສະຫະລັດ ຈັບມືຍີ່ປຸ່ນ ຕັ້ງໂຮງງານຜະລິດຂີປະນາວຸດ AMRA... (ຕໍ່ຈາກໜ້າ 12)

ແຜນຈະຈັດຕັ້ງຂຶ້ນນີ້.

ມາດຕະການທີ່ສະເໜີນີ້ນຳໃຊ້ເພື່ອເສີມຂໍ້ຕົກລົງກອບຄວາມຮ່ວມມືທີ່ລົງນາມໄປເມື່ອເດືອນກຸມພາ ລະຫວ່າງບໍລິສັດ ເຣທອີອອນ (Raytheon) ເຊິ່ງເປັນບໍລິສັດໃນເຄືອ RTX ກັບ ກະຊວງສົງຄາມສະຫະລັດ ໃນການເພີ່ມກຳລັງການຜະລິດຂີປະນາວຸດ AMRAAM ລາຍປີໃຫ້ໄດ້ຢ່າງໜ້ອຍ 1,900 ລູກ ໂດຍຂໍ້ຕົກລົງນີ້ເກີດຂຶ້ນຫຼັງຈາກທີ່ມີການຫາລືກັນເລື່ອງການຮ່ວມຜະລິດຂີປະນາວຸດມາເປັນເວລານານກວ່າ 2 ປີ.

ແຜນຄວາມຮ່ວມມືລະຫວ່າງສະຫະລັດ ແລະ ຍີ່ປຸ່ນ ໃນການຜະລິດຂີປະນາວຸດ AIM-120 AMRAAM ຂອງເຣທອີອອນ ໄດ້ຮັບການຍົກຂຶ້ນມາຫາລືເປັນຄັ້ງທຳອິດໃນປີ 2024 ໂດຍໂຄສົກສຳນັກງານຈັດຫາຍຸດໂທປະກອນ, ເຕັກໂນໂລຊີ ແລະ ການສົ່ງກຳລັງບຳລຸງຂອງຍີ່ປຸ່ນ (ATLA) ໄດ້ກ່າວກັບສຳນັກຂ່າວ Janes ໃນເວລານັ້ນວ່າ ຫາກແຜນການຮ່ວມຜະລິດຂີປະນາວຸດນີ້ “ເກີດຂຶ້ນຈິງ” ໂຄງການດັ່ງກ່າວ “ຈະເຂົ້າມາຊ່ວຍເສີມຄັງສຳຮອງຂີປະນາວຸດ AIM-120 ຂອງຍີ່ປຸ່ນ”.

ຕໍ່ມາໃນເດືອນເມສາ ພາຍຫຼັງຈາກການສຶກສາຄວາມເປັນໄປໄດ້ເຊິ່ງໄດ້ຮັບການສະໜັບສະໜຸນຈາກ ມິດຊູບິຊິ ອີເລັກທຣິກ (Mitsubishi Electric) ແລະ ເຣທອີອອນ, ສະຫະລັດ ແລະ ຍີ່ປຸ່ນ ໄດ້ຫາລືກັນກ່ຽວກັບການຈັດຕັ້ງໂຮງງານ FACO ສຳລັບ AMRAAM ໃນຍີ່ປຸ່ນ ລວມເຖິງການຂະຫຍາຍຂອບເຂດຂອງການຮ່ວມຜະລິດໃຫ້ຄອບຄຸມເຖິງຊຸດແຜງວົງຈອນອີເລັກທຣອນິກອີກດ້ວຍ.

◆ **ຂ່າວຕ່າງປະເທດ** · 18:04 ໂມງ · ອ່ານ 3 ຄັ້ງ

ລາຄາອ້າງອີງແກ໊ສທຳມະຊາດ ຂອງເອີຣົບ ລົ່ນກາຍ 100 ເອີໂຣ ເປັນຄັ້ງທຳອິດ ໃນຮອບ 4 ປີ



ວິທະຍຸ ໂທລະພາບ ສູນກາງຈີນ, ລາຄາແກ໊ສທຳມະຊາດ ຂອງເອີຣົບ ໄດ້ສືບຕໍ່ເພີ່ມສູງຂຶ້ນ.ລາຄາແກ໊ສທຳມະຊາດ ທີ່ຈະສົ່ງມອບ ໃນເດືອນພະຈິກ ໃນຕະຫລາດໂອນສິດ ໂຮນລັງຫລື TTF ທີ່ເປັນລາຄາ ອ້າງອີງ ຂອງເອີຣົບໄດ້ເພີ່ມຂຶ້ນ ໂດຍລົ່ນກາຍ 100 ເອີໂຣ ຕໍ່ເມກາວັດຊົ່ວໂມງ ເປັນຄັ້ງທຳອິດ ນັບແຕ່ ເດືອນທັນວາປີ 2022 ເປັນຕົ້ນມາ ແລະ ມາຮອດ ເດືອນນີ້, ລາຄາອ້າງອີງ ຂອງແກ໊ສທຳມະຊາດເອີຣົບ ໄດ້ເພີ່ມຂຶ້ນ ປະມານ 40%. ນັກວິເຄາະຕະຫລາດເຫັນວ່າ:ຄັງສຳຮອງແກ໊ສທຳມະຊາດຂອງເອີຣົບ ໃນປັດຈຸບັນ ຢູ່ໃນລະດັບຄ່ອນຕ່ຳ, ຫລາຍປັດໃຈອາດ ຈະເຮັດໃຫ້ລາຄາແກ໊ສທຳມະຊາດ ເພີ່ມສູງຂຶ້ນຕື່ມອີກ./.

(ບັນນາທິການຂ່າວ: ຕ່າງປະເທດ) ຮຽບຮຽງ ຂ່າວ ໂດຍ: ສະໄຫວ ລາດປາກດີ

◆ **ຂ່າວຕ່າງປະເທດ** · 16:45 ໂມງ · ອ່ານ 3 ຄັ້ງ

ອຸດສາຫະກຳສ້າງກຳປັ່ນຂອງ ສປ ຈີນ ພັດທະນາຢ່າງວ່ອງໄວ



ວິທະຍຸ ໂທລະພາບ ສູນກາງຈີນ, ວັນທີ 28 ຕຸລານີ້, ທ່ານ ຫລີຢົ່ງຊິ້ງຮອງປະທານສະມາຄົມອຸດສາຫະກຳກຳປັ່ນຈີນ ໄດ້ກ່າວວ່າ:ອຸດສາຫະກຳສ້າງກຳປັ່ນຂອງ ສປ ຈີນ ສືບຕໍ່ຮັກສາທ່າອຽງ ການພັດທະນາ ຢ່າງວ່ອງໄວ.ປັດຈຸບັນ, ໂຮງງານສ້າງກຳປັ່ນຂອງ ສປ ຈີນ ໄດ້ຮັບການສັ່ງຈອງມີເຖິງ 399 ລ້ານ DWT (ບັນຈຸນ້ຳໜັກໄດ້ 399 ລ້ານໂຕນ)ເຊິ່ງເປັນປະລິມານ ວຽກງານໃນ 4 ປີຂ້າງໜ້າ ແລະ ສ້າງພື້ນຖານອັນໜັກແໜ້ນ ໃຫ້ແກ່ການພັດທະນາແບບຍືນຍົງຂອງອຸດສາຫະກຳກຳປັ່ນແລະ ອຸດສາຫະກຳທາງທະເລ. ທ່ານ ຫລີຢົ່ງຊິ້ງ ກ່າວວ່າ:ໃນລະຫວ່າງ ເດືອນມັງກອນ ຫາເດືອນກັນຍາປີນີ້, ໂຮງງານສ້າງກຳປັ່ນຂອງ ສປ ຈີນ ໄດ້ຮັບໃບສັ່ງຈອງກຳປັ່ນໃໝ່ເຖິງ 175 ລ້ານ DWT (ບັນຈຸນ້ຳໜັກໄດ້ 175 ລ້ານໂຕນ), ເພີ່ມຂຶ້ນ 163.2% ເມື່ອທຽບໃສ່ໄລຍະດຽວກັນຂອງປີກາຍ, ກວມເອົາ 81.8% ຂອງການຊື້-ຂາຍທົ່ວໂລກ, ພຽງແຕ່ການຊື້ຂາຍ ໃນ 6 ເດືອນຕົ້ນປີນີ້ ກໍເກີນ ຈຳນວນທັງໝົດ ຂອງປີກາຍ ເຊິ່ງເປັນການພິສູດ ຕໍ່ໂລກອີກຄັ້ງ ກ່ຽວກັບ ຄວາມສາມາດການແຂ່ງຂັນ ສັງລວມ ຂອງໂຮງງານສ້າງກຳປັ່ນຂອງ ສປ ຈີນແລະ ຄວາມໄວ້ເນື້ອເຊື່ອໃຈ ຂອງສາກົນທີ່ມີຕໍ່ ສປ ຈີນ./.

(ບັນນາທິການຂ່າວ: ຕ່າງປະເທດ) ຮຽບຮຽງ ຂ່າວໂດຍ: ສະໄຫວ ລາດປາກດີ

ລາຄານ້ຳມັນ, ເງິນ, ຄຳ, ຫວຍ ແລະ ອາກາດ — ສົດທຸກມື້

ເບິ່ງຕົວເລກລ່າສຸດ ທີ່ mahaxan.com/today · ໜ້າ 15 ໃນສະບັບນີ້

ໂຄສະນາ


EMERGING DIGITAL SOLUTIONS
ແນວຄິດ → ອອກແບບ → ເປີດໃຊ້ງານ
ຮັບອອກແບບ ແລະ ພັດທະນາ ເວັບໄຊທ์ · ແອັບ · ລະບົບທຸລະກິດ
ທ່ານມີແນວຄິດ?
ພວກເຮົາຊ່ວຍສ້າງໃຫ້ເປັນຈິງ
ບໍ່ວ່າທ່ານຢາກເຮັດລະບົບຫຍັງ , ພວກເຮົາຊ່ວຍໃຫ້ຄຳປຶກສາ ແລະ ສ້າງໃຫ້ເປັນຈິງໄດ້
ອໍເດີໃໝ່ #1024 ຈາກແອັບ
app.huanlao.la/dashboard
ເຮືອນລາວ
ພາບລວມມື້ນີ້
+ ເພີ່ມເມນູ
ຍອດຂາຍມື້ນີ້
₭ 4.250.000
86
12
ຍອດຂາຍ 7 ມື້
ຢາກມີລະບົບ ເປັນຂອງ ຕົວເອງບໍ? ເຮົາສ້າງໃຫ້
ມື້ນີ້ກິນຫຍັງດີ?
ເຝີງົ້ວພິເສດ
₭ 45.000
ລາບໄກ່
₭ 40.000
ຕຳໝາກຮຸ່ງ
₭ 25.000
ສັ່ງເລີຍ
ສິ່ງທີ່ພວກເຮົາສ້າງໃຫ້ທ່ານ
ເວັບໄຊທ์ທຸລະກິດ
ເວັບແອັບ
ແອັບມືຖື
ຮ້ານຄ้าออนลาย
ລະບົບ CRM
ລະບົບ ERP
ปลั๊กอิน & API
ໂຊລູຊັ່ນ AI
ติดต่อได้เลย, ให้คำปึกสาฟรี
020 58886182
ສະແກນ QR ເພື່ອແຊັດ WhatsApp · eds.la

ມະຫາສານ ມື້ນີ້: ນ້ຳມັນ, ເງິນ, ຄຳ, ຫວຍ, ອາກາດ

ສະໜັບສະໜຸນໂດຍ [ແບຣນຂອງທ່ານ] · ພື້ນທີ່ນີ້ວ່າງ — ໜ້າຂໍ້ມູນທີ່ຄົນເປີດເບິ່ງທຸກມື້ WhatsApp 020 5888 6182

ລາຄານ້ຳມັນ 18 ແຂວງ

ກີບ/ລິດ · ມີຜົນ 22/10/2026

ແຂວງ	ແອັດຊັ່ງ 95	ທຳມະດາ 91	ກາຊອນ
ນະຄອນຫຼວງວຽງຈັນ	**▼ 40,230**	**▼ 34,490**	**▼ 34,040**
ແຂວງວຽງຈັນ	▼ 40,230	▼ 34,490	▼ 34,040
ຜົ້ງສາລີ	▼ 41,220	▼ 35,480	▼ 35,030
ຫຼວງນ້ຳທາ	▼ 40,720	▼ 34,990	▼ 34,530
ອຸດົມໄຊ	▼ 40,900	▼ 35,160	▼ 34,710
ບໍ່ແກ້ວ	▼ 40,330	▼ 34,590	▼ 34,140
ຫຼວງພະບາງ	▼ 40,740	▼ 35,000	▼ 34,550
ຫົວພັນ	▼ 40,740	▼ 35,000	▼ 34,550
ໄຊຍະບູລີ	▼ 40,550	▼ 34,820	▼ 34,370
ຊຽງຂວາງ	▼ 40,430	▼ 34,680	▼ 34,230
ໄຊສົມບຸນ	▼ 40,650	▼ 34,910	▼ 34,470
ບໍລິຄຳໄຊ	▼ 40,280	34,540	▼ 34,090
ຄຳມ່ວນ	▼ 40,260	▼ 34,520	–
ສະຫວັນນະເຂດ	▼ 40,260	▼ 34,520	▼ 34,070
ສາລະວັນ	▼ 40,510	▼ 34,780	▼ 34,330
ເຊກອງ	▼ 40,510	▼ 34,770	▼ 34,330
ຈຳປາສັກ	▼ 40,290	▼ 34,550	▼ 34,100
ອັດຕະປື	▼ 40,560	▼ 34,820	▼ 34,370

ແຫຼ່ງ: ລາຍງານລາຄາ ລັດວິສາຫະກິດນ້ຳມັນເຊື້ອໄຟລາວ · mahaxan.com/today/fuel · ▲ ຂຶ້ນ ▼ ລົງ ທຽບກັບລາຄາກ່ອນ (17/09)

ປະຕິທິນ

ວັນສຳຄັນ ທີ່ໃກ້ມາເຖິງ

03/11		ວັນພຣະ
09/11		ວັນພຣະ
10/11		ເດືອນ 12
17/11		ວັນພຣະ

ໂຄສະນາ

ລົງໂຄສະນາ ໃນ ມະຫາສານ ລາຍວັນ

ໜັງສືພິມ PDF ປະຈຳວັນ · ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ

WhatsApp 020 5888 6182

ອັດຕາແລກປ່ຽນ

ກີບ · BCEL 30/10/2026

ສະກຸນເງິນ	ຊື້ (ເງິນສົດ)	ຂາຍ
USD ໂດລາ ສະຫະລັດ	▼ 22,291	▼ 22,632
THB ບາດ ໄທ	▲ 667.25	▲ 680.51
CNY ຢວນ ຈີນ	▲ 3,331	▲ 3,397
EUR ເອີໂຣ	▲ 24,896	▲ 25,391
VND ດົ່ງ ຫວຽດນາມ	0.86	0.87
JPY ເຢັນ ຍີ່ປຸ່ນ	▲ 141.28	▲ 144.06
SGD ໂດລາ ສິງກະໂປ	▼ 17,101	▼ 17,782
GBP ປອນ ອັງກິດ	▲ 29,770	▲ 30,362

ສະເລ່ຍທະນາຄານ (ທຫລ): USD ຊື້ 22,407 · ຂາຍ 22,630 · ▲ ຂຶ້ນ ▼ ລົງ ທຽບກັບມື້ກ່ອນ

ລາຄາຄຳ

ກີບ · ຂາຍ

ຄຳຮູບປະພັນ 1 ບາດ

—

ຄຳແທ່ງ 99.99% · 1 ກຣາມ

2,954,800

▼ 20,200

ອັບເດດ 30/10 21:50 · mahaxan.com/today/gold

ຫວຍພັດທະນາ

ງວດ 186

ອອກວັນທີ 30/10/2026

863206

ງວດ 185 · 29/10	723294
ງວດ 184 · 28/10	740618
ງວດ 183 · 27/10	653372
ງວດ 182 · 26/10	160042

ພະຍາກອນອາກາດ

ວັນຈັນ 2 ພະຈິກ 2026

ເມືອງ	ຕ່ຳ–ສູງ	ສະພາບ
ວຽງຈັນ	24.2–30.9°C	ແຈ່ມໃສ
ຫຼວງພະບາງ	22.9–31.3°C	ມີຝົນ
ໂພນສະຫວັນ	18.6–26.8°C	ມີຝົນ
ຊຳເໜືອ	19.3–26.8°C	ມີຝົນ
ສະຫວັນນະເຂດ	23.8–31.6°C	ມີຝົນ
ປາກເຊ	24.4–31.5°C	ມີຝົນ


ແຫຼ່ງ: MET Norway · ຂໍ້ມູນສົດ: mahaxan.com/today

ຕົວເລກປ່ຽນທຸກມື້ — ເບິ່ງສົດ

ລາຄານ້ຳມັນ, ເງິນ, ຄຳ, ຫວຍ ແລະ ອາກາດ ອັບເດດສົດ ທີ່ mahaxan.com/today

ແຈ້ງການ

ດ່ວນ ແຈ້ງການມອດໄຟ ວັນທີ 01 ພະຈິກ 2026



ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ລັດວິສາຫະກິດໄຟຟ້າລາວ
ຝ່າຍຄຸ້ມຄອງລະບົບໄຟຟ້າພາກກາງ
ສາຂາມະຄອນຫຼວງວຽງຈັນ2

ເລກທີ 762/ຜລຄ.ນວ2
ນະຄອນຫຼວງວຽງຈັນ, ວັນທີ 31 OCT 2026

ແຈ້ງການມອດໄຟ

ເຖິງ: ທ່ານຜູ້ຊົມໃຊ້ໄຟຟ້າໃນຂອບເຂດເມືອງປາກງື່ມ ນະຄອນຫຼວງວຽງຈັນ ທີ່ເຄົາລົບຢ່າງສູງ

ເລື່ອງ: ຂໍອະນຸຍາດ ແຈ້ງມອດໄຟຍ້ອນສາຍແຮງກາງ 22kV (ກິໂລໂວນ) ໃນສາຍແຈກ MSS 6.9 ຂອງສະຖານີໄຟຟ້າທ່ານແລ້ວ

- ອີງຕາມ ໜັງສືສະເໜີຂໍມອດໄຟ ຂອງບໍລິສັດ ອາດວິໄລ ເອເລັກໂຕຣ ຈຳກັດຜູ້ດຽວ, ສະບັບເລກທີ: 189/ AVL, ລົງວັນທີ: 05/09/2026

ບໍລິສັດ ລັດວິສາຫະກິດໄຟຟ້າລາວ ຝ່າຍຄຸ້ມຄອງລະບົບໄຟຟ້າພາກກາງ ສາຂາມະຄອນຫຼວງວຽງຈັນ2 ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າໃນວັນທີ: **01/11/2026 ເວລາ 10:00 ຫາ 12:00 ໂມງ** (ກຳນົດເວລາພາຍໃນ 02 ຊົ່ວໂມງ) ຕ້ອງການໄຟຟ້າເມືອງປາກງື່ມ ຈະໄດ້ມີການມອດໄຟຕາຍ 22kV ສາຍແຈກ MSS 6.9 ເປັນບ່ວງ ກ້ວາງ (ແຕ່ LBS ໄດ້ງ ບ້ານນາລ້ອງ ຫາ LBS ບ້ານໜອງບົວທອງ) ເພື່ອໃຫ້ບໍລິສັດ ອາດວິໄລ ເອເລັກໂຕຣ ຈຳກັດຜູ້ດຽວ ປະຕິບັດວຽກເຂື່ອມຕໍ່ຕາຍໜ້ແບ່ງ 50kVA ຕົ້ງຢູ່ບ້ານໜາຫລວ, ເມືອງປາກງື່ມ, ນະຄອນຫຼວງ ວຽງຈັນ.

ການມອດໄຟໃນຄັ້ງນີ້ອາດສົ່ງຜົນກະທົບຕໍ່ຜູ້ຊົມໃຊ້ໄຟຟ້າເປັນບໍລິເວນກ້ວາງ ຢູ່ໃນຮິຮະດັບຫ້ວງຸ່ມນີ້:

1. ບ້ານສ້ຳໂສ ເຮືອນຂະນ້ຳ
2. ສ້ຳອີເຮ້ຳ ຂຸມຄຸດ
3. ບ້ານສ້ຳໂສ
4. ບ້ານນ ໜ່ານ
5. ບ້ານໜອງບົວທອງ ເນື້ອທ່ຽກຄ ກ ກ
6. ໂຮງການ ້ຳ ກ ອນ ຫ ມ ເຄ ອນ
7. ສ ອນ ຫ ານ ຈ ັ ນ ໄ ທ
8. ໂ ຮ ງ ການ ຕ ິ ດ ຕ ັ ້ ງ ຫ ມ ໍ ້ ແ ປ ງ

ດັ່ງນັ້ນ, ຈຶ່ງຂໍຮຽນແຈ້ງມາຍັງທ່ານຜູ້ຊົມໃຊ້ໄຟຟ້າໄດ້ຮັບຊາບ ເພື່ອຫາວິທີກະກຽມແຜນການຫຼົມໃຊ້ໄຟໃຫ້ເໝາະສົມ ແລະ ໃນນາມບໍລິສັດ ລັດວິສາຫະກິດໄຟຟ້າລາວ ຂໍອະໄພໃນຄວາມບໍ່ສະດວກໃນຄັ້ງນີ້ດ້ວຍ.

ຂຽນດ້ວຍຄວາມເຄົາລົບນັບຖືຢ່າງສູງ
ຫົວໜ້າ ສາຂາມະຄອນຫຼວງວຽງຈັນ2
ວິ ລະ ສັ ກ ດ ວ ງ ດ າ ລ າ

Scan QRC ode ເບື່ອຫາຂ່າວມອດໄຟ
ຄວາມຄາດຕ ມ ມ ມ

ໂຄສະນາ

ເຂົ້າເຖິງຜູ້ອ່ານຄົນລາວ ທຸກເຊົ້າ

ໜ້າຫຼັງ ແມ່ນໜ້າທີ່ເຫັນທຸກຄັ້ງທີ່ປິດໜັງສືພິມ. ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ.

ເບິ່ງລາຄາ: mahaxan.com/media-kit

ຮັບ ມະຫາສານ ລາຍວັນ ທາງອີເມວ ຟຣີ

ໜັງສືພິມສະບັບໃໝ່ ສົ່ງເຖິງອີເມວທ່ານ ທຸກເຊົ້າ ກ່ອນເຂົ້າວຽກ. ສະແກນ QR ຫຼື ເຂົ້າ mahaxan.com/newspaper

ມະຫາສານ ລາຍວັນ ຈັດພິມໂດຍ ມະຫາສານ (mahaxan.com) · 302/3B ຊັ້ນ 3 ອາຄານວຽງວັງ, ຖະໜົນບໍລິຈັນ, ນະຄອນຫຼວງວຽງຈັນ · info@mahaxan.com · WhatsApp +856 20 5888 6182
ຂ່າວໃນສະບັບນີ້ ເຜີຍແຜ່ໃນ mahaxan.com ວັນສຸກ 30 ຕຸລາ – ວັນອາທິດ 1 ພະຈິກ 2026. ສຳເນົາ PDF ນີ້ໃຫ້ໝຸ່ນໄດ້ຟຣີ ໂດຍບໍ່ດັດແກ້ເນື້ອໃນ.